# ວັດຈະນານຸກົມ

# ພາສາລາວ





ຄົ້ນຄ້ວາ ແລະ ຮຽບຮຽງໂດຍ:

ດຣ. ທອງຄຳ ອ່ອນມະນີສອນ

# ຄຳນຳຂອງກົມວັບບະຄະດີ

## ພິມຄັ້ງທີໜຶ່ງ

ວັດຈະນານຸກົມ ເປັນປຶ້ມທ້ອນໂຮມ ແລະ ບັນຈຸຄຳເວົ້າທີ່ມີຢູ່ໃນພາສາແຕ່ລະພາສາ ຂອງແຕ່ລະຊາດ ແຕ່ລະເຜົ່າຊົນ ໂດຍຈັດຮຽງລຳດັບໃຫ້ເປັນໝວດໝູ່ ຕາມລະບຽບຂອງອັກຂະຫຼະວິທີ, ທັງມີການບອກສຽງອ່ານ, ໃຫ້ຄຳນິຍາມ ແລະ ຄວາມໝາຍຢ່າງຊັດເຈນ; ນອກນີ້ ຍັງບອກປະຫວັດຂອງຄຳສັບ ເພື່ອໃຫ້ຮູ້ທີ່ມາຂອງຄຳນັ້ນໆ ເທົ່າທີ່ມີຄວາມສາມາດຈະບອກໄດ້. ວັດຈະນານຸກົມຂອງພາສາໃດ ຫຼືຊາດໃດ ກໍສ່ອງແສງ ແລະ ວັດແທກລະດັບວັດທະນະທຳຄົນໃນຊາດ ຂອງຜູ້ເປັນເຈົ້າຂອງພາສານັ້ນໆ. ດັ່ງນັ້ນ ວັດຈະນານຸກົມພາສາລາວ ຈຶ່ງເປັນເຄື່ອງວັດແທກ ແລະ ສ່ອງແສງລະດັບວັດທະນະທຳຂອງຊາດລາວເຮົາໂດຍແທ້.

ການທີ່ ດຣ. ທອງຄຳ ອ່ອນມະນີສອນ ພ້ອມດ້ວຍເພື່ອນຮ່ວມງານ ໄດ້ມີວິລິຍະ ອຸດສາຫະພາກພຽນຄົ້ນຄວ້າ ແລະ ຮຽບຮຽງປຶ້ມວັດຈະນານຸກົມພາສາລາວຂຶ້ນ ພ້ອມທັງພິມອອກຮັບໃຊ້ສັງຄົມໃນໄລຍະໃໝ່ນີ້ ຈຶ່ງເປັນການອຸທິດວິທະຍາທານ ປະກອບສ່ວນສຳຄັນທີ່ສຸດ ໃຫ້ແກ່ການຟື້ນຟູປົກປັກຮັກສາ ສົ່ງເສີມ ແລະ ພັດທະນາ ວັດທະນະທຳທາງພາສາຂອງຊາດ ເຊິ່ງສົມຄວນໄດ້ຮັບການຍ້ອງຍໍສັນລະເສີນເປັນຢ່າງຍິ່ງ.

ກົມວັບບະຄະດີ ເຫັນວ່າ ວັດຈະນານຸກົມພາສາລາວ ທີ່ບັນຈຸຄຳສັບໄວ້ໄດ້ ເກືອບສອງໝື່ນຄຳສະບັບນີ້ ເປັນຜົນງານທາງປັນຍາ ທີ່ມີຄຸນຄ່າສູງ ເພາະນອກຈາກຈະສາມາດຖືເອົາເປັນຫຼັກ ຫຼືທີ່ເປິກສາທາງດ້ານພາສາລາວ ໄດ້ເປັນຢ່າງດີແລ້ວ ຍັງມີຄຸນປະໂຫຍດສຳຄັນ ໃຫ້ແກ່ຊາດລາວສັງຄົມລາວ ຫຼາຍປະການ :

1. ໃນທົ່ວສັງຄົມລາວ ຈະໄດ້ມີປຶ້ມວັດຈະນານຸກົມພາສາລາວຂອງຕົນໃຊ້.
2. ຄົນລາວເຮົາ ຈະຮູ້ໄດ້ວ່າ ພາສາລາວ ທີ່ຖືວ່າເປັນສ່ວນໜຶ່ງຂອງວັດທະນະທຳ ອັນລ້ຳຄ່າຂອງຊາດນັ້ນ ອຸດົມສົມບູນ ແລະ ຮັ່ງມີຫຼາຍໜ້ອຍປານໃດ.
3. ວັດຈະນານຸກົມພາສາລາວນີ້ ຈະຊ່ວຍແກ້ຂໍ້ຂ້ອງໃຈ ແລະ ໄຂປະຕູປັນຍາໃຫ້ທ່ານຜູ້ໃຊ້ທັງຫຼາຍ ສາມາດຊອກຫາຄຳສັບ, ຄຳນິຍາມ ແລະ ຄວາມໝາຍຂອງຄຳທີ່ຕ້ອງການງ່າຍຂຶ້ນ.

4. ເປັນການໄຂທາງໃຫ້ນັກສຶກສາ, ນັກຄົ້ນຄວ້າ, ຄູອາຈານ, ປັນຍາຊົນທຸກຊັ້ນຄົນ, ນັກປາດບັນດິດ ແລະ ຄົນລາວທຸກຄົນ ເຫັນໄດ້ທ່າແຮງ, ຈຸດອ່ອນ, ຈຸດແຂງ ຂໍ້ຂາດຕົກບົກພ່ອງ ແລະ ສິ່ງຍອດຍິ່ງທາງດ້ານວັດທະນະທຳຂອງຕົນ ໃນການຟື້ນຟູ, ປົກປັກຮັກສາ, ສົ່ງເສີມ ແລະ ພັດທະນາ ພາສາຂອງຊາດ.

ແນ່ນອນ, ວັດຈະນານຸກົມພາສາລາວ ທີ່ທ່ານ ດຣ. ທອງຄຳ ອ່ອນມະນີສອນ ແລະຄະນະໄດ້ພາກພຽນຄົ້ນຄວ້າຮຽບຮຽງຂຶ້ນນີ້ ຍ່ອມຫຼີກບໍ່ພົ້ນກົ້ນບໍ່ຫວິດ ຈາກຄວາມຂາດຕົກບົກຫຼົ່ນໄປໄດ້ ສະນັ້ນ ຈຶ່ງຫວັງເປັນຢ່າງຍິ່ງວ່າ ຈະໄດ້ຮັບການໃຫ້ອະໄພຈາກທຸກໆທ່ານດ້ວຍ. ໂປດໄດ້ຄິດວ່າ ວັດຈະນານຸກົມພາສາລາວສະບັບນີ້ ເປັນຂອງຄົນລາວທຸກຄົນ ເພາະວ່າມັນແມ່ນຄັງສາງເຕົ້າໂຮມຄຳເວົ້າຂອງຄົນລາວທັງຊາດ. ດັ່ງນັ້ນ ຖ້າເຫັນວ່າມີການຂາດຕົກບົກພ່ອງ ທາງດ້ານຮູບແບບການຈັດທຳ ຫຼືພົບວ່າ ຄຳສັບ, ສຳນວນ, ຄຳນິຍາມ, ຄວາມໝາຍ ແລະ ອື່ນໆ ບໍ່ຄົບຖ້ວນຊັດເຈນຍ້ອນເກັບກຳບໍ່ໝົດ ຫຼືເກີດຂຶ້ນຍ້ອນຂາດການພິຈາລະນາຢ່າງເລິກເຊິ່ງ ຂອງບັນນາທິການ ກໍຂໍໃຫ້ທ່ານຜູ້ອ່ານ ຜູ້ຊົມໃຊ້ ໄດ້ກະລຸນາ ສົ່ງຄຳຕຳໜິຕິຊົມ ໄປຍັງຜູ້ຄົ້ນຄວ້າຮຽບຮຽງ ເພື່ອວ່າຈະໄດ້ມີການປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າ ໃນການພິມຄັ້ງຕໍ່ໄປ.

ກົມວັນນະຄະດີ ຂໍສັນລະເສີນຜົນງານທີ່ມີຄຸນຄ່າ ແລະ ສຳຄັນ ຂອງ ທ່ານ ດຣ. ທອງຄຳ ອ່ອນມະນີສອນ ໄວ້ນະທີ່ນີ້ ແລະ ຂໍອຳນວຍອວຍພອນໃຫ້ທ່ານ ພ້ອມຄະນະຄົ້ນຄວ້າຮຽບຮຽງ ວັດຈະນານຸກົມພາສາລາວສະບັບນີ້ ຈົ່ງປະສົບຜົນສຳເລັດ, ມີຄວາມສຸກ ຄວາມຈະເລີນຍິ່ງໆຂຶ້ນໄປ ແລະ ຂໍໃຫ້ມີຜົນງານໃໝ່ ທີ່ໃຫຍ່ ແລະ ສຳຄັນກວ່າເກົ່າ ອອກຮັບໃຊ້ສັງຄົມ ຢ່າງບໍ່ຮູ້ຂາດຕົກບົກແຫ້ງ ເປັນຈັກເທື່ອ ດ້ວຍເທີ້ນ.

ວຽງຈັນ, ວັນທີ 5 ມິຖຸນາ 1992

ກົມວັນນະຄະດີ

# ຄຳຜາລັບ

**ຂອງ**
**ຜູ້ຄົ້ນຄວ້າຮຽບຮຽງ ວັດຈະນານຸກົມ**
**ພິມຄັ້ງທີໜຶ່ງ**

ເປັນທີ່ຮັບຮູ້ນຳກັນໂດຍທົ່ວໄປແລ້ວວ່າ ຊາດລາວເຮົາເປັນຊາດທີ່ມີປະຫວັດສາດອັນຮຸ່ງເຮືອງ ແລະ ມີອະລິຍະທຳອັນສູງສົ່ງ ມາແຕ່ບູຮານນະການຊາດໜຶ່ງ ໃນອາຊີອາຄະເນ. ມໍລະດົກວັດທະນະທຳທາງດ້ານພາສາ, ວັນນະຄະດີ, ສິລະປະ, ດົນຕີ, ປະຕິມາກຳ, ສະຖາປັດຕະຍະກຳ, ຫັດຖະກຳ ແລະ ອື່ນໆ ທີ່ປະກອບສ້າງຄຸນຄ່າວັດທະນະທຳທາງວັດຖຸ ແລະຈິດໃຈ ໄດ້ຮັບການປົກປັກຮັກສາ ແລະ ສືບຕໍ່ພັດທະນາໃຫ້ຍືນຍົງຄົງຢູ່ ຄູ່ກັບຊາດລາວ ທຸກຍຸກທຸກສະໄໝຕະຫຼອດມາ. ໜັງສືຄຳພີໃບລານຫຼາຍພັນ ຫຼາຍແສນຜູກ ໄດ້ເປັນສັກຂີພະຍານ ສະແດງບອກເຖິງຫຼັກຖານແຫ່ງວິວັດທະນາການຂອງພາສາ ແລະ ວັນນະຄະດີລາວຢ່າງຊັດເຈນ ເຊິ່ງໄດ້ກາຍເປັນແຫຼ່ງຂໍ້ມູນທາງວິຊາການ ໃຫ້ແກ່ຂະບວນການຄົ້ນຄວ້າ ເພື່ອຊອກຫາຮ່ອງຮອຍລາຍລັກອັກສອນ ແລະ ພູມປັນຍາອັນຍອດຍິ່ງ ຂອງນັກປາດອາຈານລາວ ຜູ້ດີເດັ່ນໃນອະດີດອັນຍາວໄກ. ອີກປະການໜຶ່ງ ວັນນະກຳເຫຼົ່ານັ້ນ ຍັງເປັນແກ້ວສາລະພັດນຶກ ເປັນແວ່ນແຍງທາງແນວຄິດຈິດໃຈ ທີ່ບໍ່ຈືດຈາງຮ່ວງໂຮຍ ຫຼືສູນຫາຍໄປ ພ້ອມກັບການປ່ຽນແປງຂອງກາລະເວລາ. ພາສາປາກເວົ້າ ຂີດຂຽນທີ່ອ່ອນຫວານນິ້ມນວນ ເລິກເຊິ່ງ ມ່ວນອອນຊອນ ແລະ ອຸດົມຮັ່ງມີ ໃນວັນນະຄະດີເລື່ອງຕ່າງໆ ຊີ້ສະແດງໃຫ້ເຫັນວ່າ ອານາຈັກລາວລ້ານຊ້າງໃນອະດີດ ກໍຄື ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໃນປັດຈຸບັນ ໄດ້ເຄີຍເປັນອູ່ອາລະຍະທຳ ທີ່ມີຊື່ສຽງລືຊາ ກ້ອງໄກໄປທົ່ວພິພົບມາແລ້ວຢ່າງໜ້າທະນົງໃຈຍິ່ງ.

ຄົນລາວເຮົາແຕ່ລະຍຸກ ແຕ່ລະສະໄໝ ໄດ້ມີຄວາມສະຫງວນຮັກ ຖະໜອມແພງ ແລະ ຕັ້ງໜ້າສືບທອດ ມໍລະດົກທາງປັນຍາ, ຄຸນຄ່າທາງສິລະປະສີມືລາຍມື, ຄຸນງາມຄວາມດີ, ມູນເຊື້ອວິລະກຳ ແລະ ມໍລະດົກພາສາຂອງຊາດ ທີ່ບັນພະບຸລຸດໄດ້ອຸທິດມອບໄວ້ໃຫ້ ສືບຕໍ່ກັນມາຢ່າງບໍ່ຂາດສາຍ. ສິ່ງສຳຄັນຍິ່ງ ທີ່ຢາກຈະກ່າວເນັ້ນໜັກໃນທີ່ນີ້ ກໍຄື ວັດທະນະທຳທາງພາສາຂອງຊາດລາວເຮົາ.

ເມື່ອເວົ້າເຖິງວັດທະນະທຳທາງພາສາຂອງຊາດລາວແລ້ວ ແນ່ນອນຈະຕ້ອງໄດ້ກ່າວເຖິງວັດຈະນານຸກົມ ເພາະວ່າມັນເປັນປຶ້ມລວບລວມ ທ້ອນໂຮມຄຳເວົ້າຂອງຄົນລາວທັງຊາດໄວ້ຢ່າງມີລະບົບລະບຽບ ແລະ ໝວດໝູ່ ຕາມຫຼັກເກນຂອງອັກຂະຫຼະວິທີ ແລະ ວິທະຍາສາດຂອງພາສາ ເພື່ອອຳນວຍຄວາມສະດວກສະບາຍ ໃຫ້ແກ່ຜູ້ສົນໃຈຊອກຫາຄຳເວົ້າແຕ່ລະຄຳໄດ້ຕາມຄວາມປາຖະໜາ. ໃນໄລຍະທີ່ຜ່ານມາ ໄດ້ມີນັກປາດອາຈານລາວເຮົາ ຫຼາຍທ່ານໄດ້ຄົ້ນຄວ້າຮຽບຮຽງ ຫຼືຂຽນປຶ້ມວັດຈະນານຸກົມລາວ ແລະ ປຶ້ມໄວຍາກອນລາວ ອອກຮັບໃຊ້ສັງຄົມແຕ່ຜົນງານຂອງທ່ານເຫຼົ່ານັ້ນ ຫາຊອກຊື້ໃນຕະຫຼາດຈຳໜ່າຍປຶ້ມ ໄດ້ແຕ່ພຽງບາງເຫຼັ້ມບາງສະບັບເທົ່ານັ້ນ ເຊິ່ງບໍ່ພຽງພໍກັບຄວາມຕ້ອງການຂອງຜູ້ຊົມໃຊ້. ໃນຊຸມມື້ນີ້ ການພັດທະນາແລະ ການຂະຫຍາຍຕົວທາງດ້ານສັງຄົມ, ເສດຖະກິດ-ການເມືອງ, ວັດທະນະທຳ, ວິທະຍາສາດ,ວິທະຍາການ, ເຕັກນິກ ແລະ ເຕັກໂນໂລຊີ ໄດ້ມີຜົນສະທ້ອນຕໍ່ໂລກ ກໍຄືຕໍ່ປະເທດເຮົາ ເຊິ່ງມີອິດທິພົນຊຸກດັນໃຫ້ພາສາລາວ ຂະຫຍາຍຕົວດ້ວຍສັບ ແລະ ສຳນວນໃໝ່ໆ ຫຼາຍຢ່າງຫຼາຍແນວ ທັງເປັນສັບທີ່ບັນຍັດຂຶ້ນໃຊ້ເອງພາຍໃນສັງຄົມລາວ ແລະ ທັງເປັນສັບທີ່ຢືມເອົາມາຈາກ ພາສາຕ່າງປະເທດແບບຖືກກໍມີ ບໍ່ຖືກກໍຫຼາຍປົນເປກັນ. ອັນນີ້ ກໍເປັນຕົ້ນເຫດອັນໜຶ່ງທີ່ເຮັດໃຫ້ຄົນລາວເຮົາປາກເວົ້າຂີດຂຽນ ແລະ ໃຊ້ພາສາລາວແບບຜິດພ້ຽນ ປ່ຽນແປງຈາກພາສາລາວເດີມ-ຫຼັກເດີມ ໄປຊັກໄຊ້ເຊິ່ງເປັນການພັດທະນາພາສາລາວໄປຢ່າງບໍ່ເປັນລະບົບລະບຽບ ແລະ ບໍ່ໄປຕາມກົດເກນ ວິວັດທະນາການຂອງພາສາທີ່ເປັນອິດສະຫຼະ ແລະ ມີຄວາມເປັນເອກະລາດ. ບັນຫາທີ່ພວກເຮົາປະສົບພົບພໍ້ຢູ່ໃນເວລານີ້ ຈະສາມາດແກ້ໄຂໄດ້ ດ້ວຍການເຮັດວັດຈະນານຸກົມພາສາລາວຂຶ້ນ ເພື່ອຮັບໃຊ້ທົ່ວປວງຊົນ ອັນເປັນວິທີໜຶ່ງທີ່ຈະຊ່ວຍຫຼຸດຜ່ອນຄວາມບໍ່ມີລະບຽບຫຼັກການ ໃນການໃຊ້ພາສາລາວໂດຍທົ່ວໄປ.

ຍ້ອນເຫດຜົນແນວນັ້ນ ຂ້າພະເຈົ້າ ພ້ອມດ້ວຍເພື່ອນຮ່ວມງານຫຼາຍທ່ານ ຈຶ່ງໄດ້ພ້ອມກັນພາກພຽນພະຍາຍາມອົດທົນຄົ້ນຄວ້າ ເກັບກຳທ້ອນໂຮມຄຳສັບລາວ ທີ່ນິຍົມໃຊ້ກັນຢ່າງກວ້າງຂວາງມາຈັດໄວ້ເປັນໝວດໝູ່ຕາມລຳດັບ ໂດຍໄດ້ເລີ່ມລົງມືແຕ່ປີ 1980 ເປັນຕົ້ນມາ ແລະ ໄດ້ສ້າງເປັນໂຄງການຄົ້ນຄວ້າຮຽບຮຽງ ວັດຈະນານຸກົມພາສາລາວຂຶ້ນ ໃນປີ 1988 ເຊິ່ງໄດ້ຮັບການອຸປະຖຳດ້ານການເງິນ ຈາກ ມູນນິທິໂຕໂຍຕາ ປະເທດຍີ່ປຸ່ນ.

ບັດນີ້ ຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ການຄົ້ນຄວ້າຮຽບຮຽງວັດຈະນານຸກົມພາສາລາວ ໄດ້ບັນລຸຜົນສຳເລັດ ດັ່ງຄວາມມຸ່ງມາດປາຖະໜາທີ່ຕັ້ງໄວ້ ແລະໄດ້ຖືກພິມອອກຮັບໃຊ້ປະເທດຊາດ ຕາມຄວາມຄາດຫວັງ ເພື່ອຕອບສະໜອງຄວາມຮຽກຮ້ອງຄອງຄອຍ ຂອງນັກຮຽນນັກສຶກສາ, ຄູອາຈານ, ນັກຄົ້ນຄວ້າ, ນັກປະພັນ, ນັກກະວີ, ໂຄສົກ, ນັກຂ່າວ ແລະ ຄົນລາວທຸກຄົນທີ່ຢູ່ພາຍໃນ ແລະ ຕ່າງປະເທດ ນັບທັງຄົນຕ່າງປະເທດ ທີ່ມີຄວາມປາຖະໜາຢາກຮຽນພາສາລາວນຳດ້ວຍ.

ການຄົ້ນຄວ້າ ແລະ ຮຽບຮຽງວັດຈະນານຸກົມພາສາລາວຄັ້ງນີ້ ໄດ້ຖືເອົາປຶ້ມໄວຍາກອນລາວ ຂອງ ທ່ານ ພູມີ ວົງວິຈິດ ເປັນບ່ອນອີງທາງດ້ານ ອັກຂະຫຼະວິທີ ແລະ ວະຈີວິພາກ, ຖືເອົາວັດຈະນານຸກົມພາສາລາວ ສະບັບກະຊວງສຶກສາ ປີ 1960 ເຊິ່ງລິດຈະນາ ໂດຍ ທ່ານອາຈານ ມະຫາສິລາ ວິຣະວົງ ເປັນຫຼັກອີງທາງດ້ານຂໍ້ມູນ. ທັງນີ້ ກໍເພື່ອປະຕິບັດຈຸດປະສົງ ແລະ ຄະຕິທີ່ວ່າ "ຮຽນນຳພໍ່ ກໍ່ນຳຄູ, ໝົກປາແດກມີຄູ ຈິ່ງກະປູມີວາດ" ແລະ ສືບທອດມູນເຊື້ອຜົນງານທາງປັນຍາຂອງປູ່ຍ່າຕານາຍ ທີ່ເພິ່ນໄດ້ຍື່ນມອບມໍລະດົກວັດທະນະທຳອັນລ້ຳຄ່າທາງດ້ານນີ້ ໃຫ້ແກ່ຊາດລາວເຮົາ ຢ່າງສືບເນື່ອງຕໍ່ຕິດ ໃນປະຫວັດສາດຂອງຊາດຕະຫຼອດມາ. –

ວັດຈະນານຸກົມພາສາລາວສະບັບນີ້ ບັນຈຸຄຳສັບລາວ ທັງທີ່ເປັນພາສາລາວເດີມ ແລະ ພາສາລາວສະໄໝໃໝ່ ທີ່ນິຍົມໃຊ້ກັນແຜ່ຫຼາຍຢູ່ໃນວົງເຂດເສດຖະກິດ, ການເມືອງ, ສັງຄົມ, ວິທະຍາສາດ, ສິລະປະ, ວັນນະຄະດີ ແລະ ວັດທະນະທຳ. ຜູ້ຄົ້ນຄວ້າຮຽບຮຽງ ເຊື່ອໝັ້ນວ່າ ປຶ້ມວັດຈະນານຸກົມທີ່ທ່ານພວມອ່ານຢູ່ນີ້ ຈະເອື້ອອຳນວຍຄວາມສະດວກ ແລະ ຊ່ວຍແກ້ໄຂບັນຫາ ກ່ຽວກັບຄຳເວົ້າແຕ່ລະຄຳ, ຄຳນິຍາມ ແລະ ຄວາມໝາຍຂອງຄຳສັບ ໂດຍສະເພາະຄຳສັບຍາກ ທີ່ມາຈາກພາສາລາວເດີມ, ພາສາໃນວັນນະຄະດີ, ຄຳສັບທີ່ມາຈາກພາສາປາລີ ແລະ ສັນສະກຣິດ. ແຕ່ເຖິງຢ່າງໃດກໍຕາມ ປຶ້ມວັດຈະນານຸກົມເຫຼັ້ມນີ້ ກໍຍັງບໍ່ສາມາດຖືວ່າ ເປັນສະບັບສົມບູນໄດ້ ຍ້ອນເຫດຜົນຫຼາຍປະການ. ທັງນີ້ກໍເພາະວ່າ ອາດມີຂໍ້ຜິດພາດເກີດຂຶ້ນຈາກການຕີພິມ ຫຼືການກວດແກ້ຕົ້ນສະບັບ, ການເກັບກຳທ້ອນໂຮມຄຳສັບທີ່ຈຳເປັນ ຈາກແຫຼ່ງຂໍ້ມູນຕ່າງໆ ອາດບໍ່ຄົບຖ້ວນເທົ່າທີ່ຄວນ, ການໃຫ້ຄຳນິຍາມ ແລະ ຄວາມໝາຍຂອງແຕ່ລະຄຳ ອາດບໍ່ໜັກແໜ້ນຊັດເຈນ ແລະ ອື່ນໆ. ພາສິດລາວບູຮານ ໄດ້ສັ່ງສອນໄວ້ວ່າ : "ບັນດິດຍັງຮູ້ພາດ ຫຼືສັດສີ່ຕີນຍັງຮູ້ພະລາດ ນັກປາດຍັງຮູ້ຫຼົງ, ຫົງຄຳຍັງຖືກບ້ວງ ຄວາຍນັກເຖົ້າຕື່ນໄຖ". ດັ່ງນັ້ນ ຂ້າພະເຈົ້າຈິ່ງຂໍຝາກຄວາມຫວັງໄວ້ກັບທ່ານຜູ້ອ່ານ ຜູ້ຊົມໃຊ້ທຸກໆທ່ານ ໄດ້ກະລຸນາຊ່ວຍຕຳໜິຕິຊົມໄປຍັງຂ້າພະເຈົ້າໂດຍກົງ ຫຼືຈະຜ່ານສື່ມວນຊົນກໍໄດ້ ເພື່ອວ່າຈະໄດ້ກະກຽມດັດແປງແກ້ໄຂໃຫ້ມັນຖືກຕ້ອງ ແລະ ເພີ່ມເຕີມຄຳສັບທີ່ຍັງບໍ່ທັນໄດ້ເກັບກຳເຂົ້າໃສ່ໃຫ້ມັນຄົບຖ້ວນສົມບູນຍິ່ງໆຂຶ້ນເລື້ອຍໆ ໃນໂອກາດ ທີ່ຈະພິມຄັ້ງຕໍ່ໆໄປ. ທ່ານຜູ້ມີປັນຍາທັງຫຼາຍທີ່ເຄົາລົບ ! ໂປດໄດ້ຮ່ວມຄິດ, ຮ່ວມປະດິດສ້າງ, ຮ່ວມສາຍທາງສາມັກຄີແຫ່ງການຮັກພາສາລາວ, ໃຊ້ພາສາລາວ, ປົກປັກຮັກສາ, ຟື້ນຟູ, ສົ່ງເສີມ ແລະ ພັດທະນາພາສາຂອງຊາດເຮົາໃຫ້ຈະເລີນຮຸ່ງເຮືອງ ໄວ້ດ້ວຍກຽດສັກສີຂອງຄົນລາວຍຸກໃໝ່ ເພື່ອໃຫ້ປະຫວັດສາດໄດ້ຈາລຶກໄວ້ວ່າ "ເຮົາເກີດມາເພື່ອພັດທະນາ ແລະ ສົ່ງເສີມຄຸນຄ່າວັດທະນະທຳ ແລະ ຄວາມກ້າວໜ້າໃຫ້ແກ່ສັງຄົມ". ທ່ານ ພູມີ ວົງວິຈິດ ທີ່ເປັກສາຂອງພັກ ແລະລັດຖະບານ ສ.ປ.ປ. ລາວ ໄດ້ຂຽນໄວ້ໃນບົດນຳປຶ້ມໄວຍາກອນລາວ ຂອງທ່ານຕອນໜຶ່ງວ່າ "ການປົກປັກຮັກສາ ແລະ ຟື້ນຟູຕົວໜັງສື, ຄວາມເວົ້າ, ວັນນະຄະດີ ແລະ ຫຼັກວັດທະນະທຳຂອງຊາດ ມັນສະແດງເຖິງນ້ຳໃຈຮັກຊາດ ອັນເປັນມໍລະດົກ ແລະມູນເຊື້ອອັນປະເສີດ ແຫ່ງຄວາມພິລະອາດຫານ ທີ່ພໍ່ແມ່ ປູ່ຍ່າ ຕານາຍ ຜູ້ກ້າຫານ ໄດ້ຖ່າຍທອດມາໄວ້ໃຫ້ແກ່ພວກເຮົາ".

ຂ້າພະເຈົ້າ ຂໍເວົ້າດ້ວຍຄວາມຈິງໃຈວ່າ ຜົນສຳເລັດຂອງການຄົ້ນຄວ້າຮຽບຮຽງ ວັດຈະນານຸກົມພາສາລາວສະບັບນີ້ ແມ່ນເກີດມາຈາກການເລືອກເຟັ້ນ ແລະ ປະດິດຄິດສ້າງ ບົນພື້ນຖານແຫຼ່ງຂໍ້ມູນຕ່າງໆ ທີ່ເປັນຜົນງານຂອງນັກປາດອາຈານຜູ້ປີຊາສາມາດ ສະຫຼາດສ່ອງໃສ ນັບແຕ່ສະໄໝອານາຈັກລ້ານຊ້າງເປັນຕົ້ນມາ ຈົນຮອດຍຸກສະໄໝລະບອບໃໝ່ ຄື ລະບອບປະຊາທິປະໄຕປະຊາຊົນ ໃນທຸກມື້ນີ້ ລວມທັງວັດຈະນານຸກົມຕ່າງປະເທດອື່ນໆ ເຊິ່ງຂ້າພະເຈົ້າຮູ້ສຶກເປັນໜີ້ບຸນຄຸນ ແລະ ຂໍຈາລຶກນໍລະດົກທາງພູມປັນຍາອັນປະເສີດດັ່ງກ່າວນັ້ນ ໄວ້ໃນປຶ້ມວັດຈະນານຸກົມສະບັບນີ້ຕະຫຼອດການ. ແຫຼ່ງຂໍ້ມູນອ້າງອີງທີ່ສຳຄັນມີດັ່ງຕໍ່ໄປນີ້ :

1. ໄວຍາກອນລາວ ໂດຍ : ພູມີ ວົງວິຈິດ
   ພະແນກສຶກສາສູນກາງພິມຈຳໜ່າຍ, ຊຳເໜືອ, 1967
2. ວັດຈະນານຸກົມພາສາລາວ ສະບັບກະຊວງສຶກສາ, ພິມຄັ້ງທີສອງ
   ລິດຈະນາ ໂດຍ : ມະຫາສິລາ ວິຣະວົງ
   ວຽງຈັນ, 13 ມັງກອນ 1960.
3. Dictionnaire Laotien-Francais Tome I-II
   par Marc REINHORN
   Centre Nationale de la Recherche
   Scientifique, Paris 1970
4. Lao-English Dictionary Volume I-II
   by Allen D. Kerr
   The Catholic University of America Press
   Washington, D.C. 1972.
5. ສາລານຸກົມ ພາສາ ອີສານ - ໄທ - ອັງກິດ
   ໂດຍ : ປີຊາ ພົນທອງ
   ໂຮງພິມ ສິລິທຳ, ອຸບົນລາຊະທານີ 1989
6. ພົດຈະນານຸກົມ (ພາສາໄທ) ສະບັບລາຊະບັນດິດຕະຍະສະຖານ
   ພ.ສ. 2525 ບາງກອກ, ປະເທດໄທ.
7. ໜັງສືຜູກໃບລານ, ປຶ້ມວັນນະກຳບູຮານລາວ, ປຶ້ມວັນນະຄະດີລາວສະໄໝໃໝ່, ວາລະສານ, ໜັງສືພິມ, ເອກະສານຕ່າງໆ ລວມທັງຂໍ້ມູນທີ່ເກັບກຳໄດ້ຈາກການສົນທະນາແລກປ່ຽນຄວາມຄິດເຫັນ, ການເປີກສາຫາລື ແລະ ສຳພາດປະຊາຊົນ, ບຸກຄົນສຳຄັນ, ປັນຍາຊົນ ແລະ ຜູ້ຊົງຄຸນວຸດທິ ທີ່ມີຄວາມຮູ້ຢ່າງກວ້າງຂວາງ ທາງດ້ານພາສາລາວ.

ໃນນາມຂອງຜູ້ຄົ້ນຄວ້າຮຽບຮຽງ ວັດຈະນານຸກົມພາສາລາວເຫຼັ້ມນີ້ ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນຢ່າງສູງ ແລະ ຂໍຂອບໃຈຢ່າງເລິກເຊິ່ງ ມາຍັງ ມູນນິທິໂຕໂຍຕາ ປະເທດຍີ່ປຸ່ນ ທີ່ໄດ້ໃຫ້ທຶນຊ່ວຍເຫຼືອ ໂດຍສະເພາະຢ່າງຍິ່ງ ຂໍຂອບໃຈຢ່າງລົ້ນເຫຼືອມາຍັງ ທ່ານ ໂຕອິຈິ ມະກິຕະ ຫົວໜ້າພະແນກສຳພັນຕ່າງປະເທດ ຂອງມູນນິທິໂຕໂຍຕາ ທີ່ຮັບຜິດຊອບກ່ຽວກັບການໃຫ້ທຶນ ສະໜັບສະໜູນການຄົ້ນຄວ້າທາງດ້ານວັດທະນະທຳ ແກ່ ສ.ປ.ປ. ລາວ ແລະ ນາງຢູມິໂກະ ຣິແມະໂນະໂຕະ ຜູ້ຊ່ວຍຫົວໜ້າພະແນກສຳພັນຕ່າງປະເທດ ຂອງມູນນິທິດັ່ງກ່າວ ເຊິ່ງທັງສອງທ່ານນີ້ ໄດ້ເປັນຜູ້ສະໜັບສະໜູນການລິເລີ່ມໂຄງການແຕ່ເບື້ອງຕົ້ນ ຈົນບັນລຸເຖິງຜົນສຳເລັດຢ່າງສະຫງ່າງາມ ໃນຂັ້ນສຸດທ້າຍ. ຂໍບັນດາທ່ານ ທີ່ອ້າງຊື່ມາຂ້າງເທິງນີ້ ພ້ອມດ້ວຍມູນນິທິໂຕໂຍຕາ ຈົ່ງປະສົບຜົນສຳເລັດອັນໃຫຍ່ຫຼວງ ໃນໜ້າທີ່ວຽກງານ, ມີຄວາມສຸກຄວາມຈະເລີນ ແລະກ້າວໜ້າຮຸ່ງເຮືອງຕະຫຼອດໄປ.

ພ້ອມນີ້ ກໍຂໍສະແດງຄວາມຮູ້ບຸນຄຸນ ແລະ ຂໍຂອບໃຈຢ່າງເລິກເຊິ່ງ ມາຍັງບັນດາທ່ານເພື່ອນຮ່ວມງານ ເປັນຕົ້ນແມ່ນ ທ່ານອາຈານບຸນຍົກ ແສນສຸນທອນ ທີ່ໄດ້ເສຍສະຫຼະເຫື່ອແຮງສະຕິປັນຍາ ໃຫ້ຄວາມຮ່ວມມື ແລະ ປະກອບສ່ວນຢ່າງຈິງໃຈ ໃນການເກັບກຳຂໍ້ມູນເພື່ອສ້າງໃຫ້ວັດຈະນານຸກົມພາສາລາວສະບັບນີ້ ເກີດຂຶ້ນເປັນຕົວຈິງ ຮັບໃຊ້ສັງຄົມລາວຕໍ່ໄປ.

ຫາກບຸນກຸສົນໃດທີ່ຈະເກີດຈະມີຈາກ ວັດຈະນານຸກົມພາສາລາວສະບັບນີ້ ຂ້າພະເຈົ້າຂໍອຸທິດສ່ວນກຸສົນນັ້ນແກ່ ບິດາ ມານດາ ແລະບຸບພາຈານ ຜູ້ມີພະຄຸນທຸກທ່ານ ໄວ້ນະໂອກາດນີ້ດ້ວຍ.

ວຽງຈັນ, ວັນທີ 1 ເດືອນ ມິຖຸນາ 1992

*ດຣ. ທອງຄຳ ອ່ອນມະນີສອນ*

# ຄຳຖະແຫຼງ

ວັດຈະນານຸກົມເຫຼັ້ມນີ້ ຄືຂຸມຊັບທາງດ້ານປັນຍາ ເປັນການອະນຸຮັກມໍລະດົກທາງພາສາ-ວັດທະນະທຳຂອງຊາດລາວ ໃຫ້ຢູ່ຍືນຍາວຄູ່ກັບປະຊາສັງຄົມລາວ, ທາງຫໍສະໝຸດແຫ່ງຊາດ ຖືວ່າເປັນປຶ້ມປະເພດອ້າງອີງ ໃນຊຸດສາລະໜ້າຮູ້, ສາລານຸກົມ ເຊິ່ງຈະລວມມີ ພົດຈະນານຸກົມ ວັດຈະນານຸກົມ ແລະ ອື່ນໆ ທີ່ກ່ຽວພັນກັບການອະທິບາຍຄຳສັບ ທີ່ຊົນຊາດໃດໜຶ່ງໃຊ້ກັນ. ຫໍສະໝຸດແຫ່ງຊາດ ໄດ້ຮັບກຽດໃຫ້ເປັນໜ່ວຍງານທີ່ຮັບຜິດຊອບ ດ້ານການສົ່ງເສີມການອ່ານແຫ່ງຊາດ ດ້ານການຕອບສະໜອງຂໍ້ມູນທາງດ້ານພູມປັນຍາ ໃຫ້ແກ່ປວງຊົນທັງຊາດ.

ທາງຄະນະຮັບຜິດຊອບວຽກງານສົ່ງເສີມການອ່ານ ຫຼິງເຫັນໄດ້ວ່າ ການອ່ານເປັນສິ່ງທີ່ຈຳເປັນຂອງມວນມະນຸດ ການອ່ານຄືຄວາມຮຽນຮູ້ພາສາຂອງແມ່ຕົນເອງໃຫ້ເກັ່ງ ໃຫ້ຄ່ອງແຄ້ວ ແລະເລິກເຊິ່ງ ຈຶ່ງຈະສາມາດຮຽນຮູ້ພາສາອື່ນໆໄດ້ດີ ແລະ ຕີຄວາມຂອງເນື້ອຫາທີ່ຕົນອ່ານໄດ້ຖືກຕ້ອງ.

ແຕ່ໃນ ສປປ. ລາວເຮົາ ຄວາມມອງຂ້າມການນຳໃຊ້ວັດຈະນານຸກົມ "ລາວແປລາວ" ໃນໝູ່ນັກຮຽນ ນັກສຶກສາ ແລະ ຄົນທົ່ວໄປ ຍັງມີຈຳກັດ ແລະກໍບໍ່ຄ່ອຍຈະມີໃຜສົນໃຈ ຖືວ່າປາກໄດ້ອ່ານເປັນແລ້ວພໍ ຄິດວ່າຕົນເອງເຂົ້າໃຈພາສາຕົນດີແລ້ວ ກໍເລີຍບໍ່ຈຳເປັນທີ່ຈະຕ້ອງໃຊ້ວັດຈະນານຸກົມ ເໝືອນກັບຄົນປະເທດອື່ນໆ ທີ່ໃຊ້ກັນຢ່າງບໍ່ຂາດ ຕັ້ງແຕ່ປະຊາຊົນຮອດນັກປາດອາຈານ ພວກເຂົາເຈົ້າຖືວ່າຍັງມີຫລາຍສັບທີ່ບໍ່ຮູ້ໄດ້ໝົດ ຈຶ່ງອາໄສວັດຈະນານຸກົມຊ່ວຍ.

ເຮົາ, ສັງຄົມໃນຍຸກໃໝ່ ຍຸກແຫ່ງຄວາມສີວິໄລ, ຍຸກແຫ່ງຄວາມຊັດເຈນ, ການເວົ້າ ຫຼືການຂຽນ ລ້ວນແລ້ວແຕ່ຈະຕ້ອງໃຊ້ສັບໃຫ້ຖືກຕ້ອງກັບຄວາມໝາຍ ຈຶ່ງຈະສື່ສານກັນໄດ້ຕົງປະເດັນ, ວັດຈະນານຸກົມເຫຼັ້ມນີ້ ຊ່ວຍບັນດາທ່ານທັງຫລາຍໄດ້ ແລະ ຈະໃຊ້ຄຳສັບໃຫ້ຖືກຕ້ອງກັບຄວາມໝາຍທີ່ຕ້ອງການ.

ເພື່ອຕອບສະໜອງໃຫ້ກັບຄວາມຈຳເປັນທີ່ຂາດບໍ່ໄດ້ ແລະ ຄວາມຕ້ອງການອັນຮີບດ່ວນຂອງນັກປະດິດຄິດແຕ່ງຮຸ່ນສືບທອດ. ທາງຄະນະສົ່ງເສີມການອ່ານແຫ່ງຊາດ ຈຶ່ງຕັດສິນໃຈເລືອກເອົາ ວັດຈະນານຸກົມສະບັບທີ່ປັບປຸງຄືນໃໝ່ ຄືດັ່ງທີ່ທ່ານ ດຣ. ທອງຄຳ ອ່ອນມະນີສອນ ໄດ້ແນະນຳໃນບົດຄຳນຳ.

ໃນປັດຈຸບັນ ມີອາຈານ ນັກປາດ ນັກວິຊາການຈຳນວນບໍ່ໜ້ອຍ ທີ່ມີຜົນງານທາງດ້ານການຮຽບຮຽງປຶ້ມພົດຈະນານຸກົມ, ວັດຈະນານຸກົມ ອອກຢ່າງສະໝໍ່າສະເໝີ ຜົນງານເຫຼົ່ານີ້ເພື່ອນຳມາພິມອອກຈຳໜ່າຍ ກໍລ້ວນແຕ່ມີການນຳໃຊ້ຢ່າງກວ້າງຂວາງ ຕາມຄວາມພໍໃຈຂອງໃຜລາວ.

ສຳຫຼັບຫໍສະໝຸດແຫ່ງຊາດ ໄດ້ຈັດພິມໜັງສືເຫຼັ້ມນີ້ ໃນລັກສະນະເຊັ່ນນີ້ ກໍເພື່ອເປັນສື່ກາງໃນການສັງສັນອົງຄວາມຮູ້ໃນດ້ານຕ່າງໆ ຂອງພາສາຂອງຊາດ ໃນສັງຄົມລາວ ແລະຊາວຕ່າງດ້າວທີ່ສົນໃຈກົກເຫງົ້າ ແລະ ຄວາມໝາຍຂອງພາສາລາວໃຫ້ຂະຫຍາຍຕົວອອກໄປຢ່າງກວ້າງຂວາງ.

ດຣ. ທອງຄຳ ນັກພາສາສາດ, ນັກວັນນະຄະດີ, ນັກຄົ້ນຄວ້າຜູ້ຊົງປັນຍາ ແລະ ເປັນນັກກະວີທີ່ໄດ້ຮັບຮາງວັນຊີໄຣ ຜູ້ອຳທິດຂອງ ສປປ.ລາວ, ແລະ ຍັງເປັນວິຊາການຜູ້ແຕ່ງຕຳລາຮຽນນຳອີກດ້ວຍເປັນຜູ້ຄົ້ນຄວ້າ ແລະ ຮຽບຮຽງປຶ້ມເຫຼັ້ມນີ້ ຈຶ່ງໄດ້ເຊີນຊວນໃຫ້ນັກວິຊາການລາວ, ຄູອາຈານ, ນິສິດນັກສຶກສາ, ປັນຍາຊົນ ແລະ ປວງຊົນ ທີ່ສົນໃຈພາສາລາວ ຄວາມສຳຄັນຂອງພາສາ-ວັດທະນະທຳ.

ໃນຂະບວນການພັດທະນາວັດທະນະທຳ-ພາສາ ມີການພັດທະນາ ແລະ ບໍ່ຢຸດຢັ້ງ ສັນໃດ, ວັດຈະນານຸກົມກໍມີການພັດທະນາ, ປັບປຸງເຕີມແຕ້ມໃຫ້ສົມບູນແບບ ເພື່ອຄວາມພໍອົກພໍໃຈຂອງຜູ້ສະແຫວງຮຽນຮູ້.

ນະຄອນຫລວງວຽງຈັນ, 5 ມິຖຸນາ 2008
ຜູ້ອຳນວຍການ ຫໍສະໝຸດແຫ່ງຊາດ

***ກົງເດືອນ ເນດຕະວົງ***

# ຄຳນຳ

**ພິມຄັ້ງທີສອງ**
**(ສະບັບປັບປຸງໃໝ່)**

**ວັດ** ຈະນານຸກົມ ຄືຄັງພາສາຂອງຊາດ ທີ່ມີບົດບາດສຳຄັນຢ່າງຍິ່ງ ຕໍ່ການອະນຸຮັກ ປົກປັກຮັກສາ ແລະ ພັດທະນາວັດທະນະທຳ ແລະ ຖືເປັນປຶ້ມປະເພດອ້າງອີງ ທີ່ຈຳເປັນ ແລະ ສຳຄັນທີ່ສຸດ ໃນການໃຊ້ພາສາໃຫ້ຖືກຕ້ອງ ທັງໃນດ້ານການຂຽນ ແລະ ປາກເວົ້າ. ແຕ່ການເຮັດວັດຈະນານຸກົມນັ້ນ ນັບວ່າເປັນວຽກທີ່ຫຍຸ້ງຍາກ ລຳບາກສັບສົນຫຼາຍ ເພາະຕ້ອງໄດ້ຄິດ ຫຼາຍຢ່າງລ້ຳເລິກ ຕ້ອງດຸໝັ່ນອະຫຍັນພຽນ ສະສົມຮັບໂຮມ ເກັບກຳຂໍ້ມູນຈຳນວນມະຫາສານ ແລະ ຕ້ອງໄດ້ພິສູດກວດກາ ພິຈາລະນາເລືອກເຟັ້ນຄຳສັບ, ໃຫ້ຄຳນິຍາມ ແລະ ຄົ້ນຄິດ ທົບທວນຫຼາຍຫຼັບ ຫຼາຍຕ່າວ ກວ່າຈະຕົກລົງປົງໃຈ ຕັດສິນເອົາຄຳໃດຄຳໜຶ່ງໄດ້.

ເຖິງປານນັ້ນກໍຕາມ ບັນດານັກປາດອາຈານຂອງຊາດທີ່ມີອະລິຍະທຳ ແລະ ຄວາມສີວິໄລ ທາງຈິດໃຈ ກໍ່ຍັງໄດ້ໃຊ້ສະຕິປັນຍາ ຄວາມຮູ້ຄວາມສາມາດ ແລະ ເຫື່ອແຮງ ອຸທິດ ຖອກເທໃສ່ການ ຄົ້ນຄວ້າ ປະດິດຄິດສ້າງວັດຈະນານຸກົມຂອງຊາດຕົນຂຶ້ນ ເພື່ອຈຸດປະສົງຢາກສິ່ງຍື່ນຄວາມຮູ້ ແລະ ຄຸນຄ່າອັນປະເສີດທາງພາສາ ໃຫ້ແກ່ປະຊາຊົນຄົນທັງຊາດ ໄດ້ອ່ານໄດ້ຊົມໃຊ້ຢ່າງທົ່ວເຖິງ ອັນເປັນ ການໃຫ້ແສງສະຫວ່າງທາງສະຕິປັນຍາ ແລະ ຍົກລະດັບວັດທະນະທຳໃຫ້ສູງຂຶ້ນ ຢ່າງບໍ່ຢຸດຢັ້ງ.

ນັກພາສາສາດ ນັກວັນນະຄະດີ ນັກຄົ້ນຄວ້າຜູ້ຊົງປັນຍາ ແລະປີຊາສາມາດທັງຫຼາຍ ຕ່າງກໍ່ ພາກັນເວົ້າເປັນສຽງດຽວວ່າ ພາສາ ຍ່ອມມີເກີດ ພັດທະນາ ເສີມຂະຫຍາຍ ແລະສະຫຼາຍດັບໄປ ເຊັ່ນດຽວກັບຄົນ ແລະ ສັບພະສິ່ງວັດຖຸທັງຫຼາຍທັງປວງຢູ່ໃນໂລກ. ຄຳສັບ ແລະ ຄວາມໝາຍ ໃນພາສານັ້ນ ກໍຕົກຢູ່ໃນກະແສວັດຕະ ແຫ່ງການໝູນວຽນປ່ຽນແປງໄປເຊັ່ນດຽວກັນ. ຊົ່ວໄລຍະ ເວລາບໍ່ພໍທໍ່ໃດທົດສະວັດ ກໍມີຄຳສັບຈຳນວນຫຼາຍ ໄດ້ຕາຍໄປຢ່າງໜ້າເສຍດາຍ. ພ້ອມກັບນັ້ນ ກໍມີຄຳໃໝ່ ສຳນວນໃໝ່ເກີດຂຶ້ນຢ່າງຫຼວງຫຼາຍ ເຊິ່ງລວມທັງຄຳສັບທີ່ຢືມມາຈາກພາສາຕ່າງປະເທດ ນຳດ້ວຍ.

ດັ່ງນັ້ນ ເພື່ອເປັນການແກ້ໄຂບັນຫາດັ່ງກ່າວ ໃຫ້ສອດຄ່ອງກັບຄວາມຈິງ ແລະ ສງຽຮຣກ້ອງ ຂອງສັງຄົມ ກໍຄືຄວາມຕ້ອງການ ແລະ ຈຳເປັນຂອງການສຶກສາ ຈຶ່ງຄວນທີ່ຈະໄດ້ປັບປຸງ ແກ້ໄຂ ປຶ້ມວັດຈະນານຸກົມ ແລະ ເພີ່ມຕື່ມຄຳສັບໃໝ່ເຂົ້າໃສ່ໃຫ້ສົມບູນ ແລະທັນສະໄໝຂຶ້ນໄປເລື້ອຍໆ.

ຕາມຄວາມຈິງແລ້ວ ຢູ່ປະເທດຕ່າງໆ ໃນທົ່ວໂລກ ເພິ່ນນິຍົມປັບປຸງ ແກ້ໄຂ ແລະເພີ່ມຕື່ມ ຄຳສັບໃໝ່ເຂົ້າໃສ່ວັດຈະນານຸກົມ ຢ່າງນ້ອຍ 10 ປີ ເທື່ອໜຶ່ງ ຫຼື ຢ່າງເຫິງກໍ່ບໍ່ຄວນເກີນ 20 ປີ.

ວັດຈະນານຸກົມພາສາລາວ ທີ່ຂ້າພະເຈົ້າໄດ້ຄົ້ນຄວ້າຮຽບຮຽງ ແລະ ພິມອອກຮັບໃຊ້ສັງຄົມ ໃນປີ 1992 ນັ້ນ ເມື່ອຄິດໄລ່ເບິ່ງເວລາແລ້ວ ກໍ່ໄດ້ 16 ປີພໍດີ ເຊິ່ງສົມຄວນຢ່າງຍິ່ງທີ່ຈະຕ້ອງໄດ້ປັບປຸງ ແກ້ໄຂ ດັດແປງ ແລະ ເພີ່ມຕື່ມຄຳສັບໃໝ່ໆເຂົ້າໃສ່. ດ້ວຍເຫດຜົນດັ່ງກ່າວມາແລ້ວຂ້າງເທິງນັ້ນ ຂ້າພະເຈົ້າຈຶ່ງໄດ້ຕັດສິນໃຈເລີ່ມດຳເນີນການປັບປຸງ ວັດຈະນານຸກົມ ຂອງຂ້າພະເຈົ້າ ນັບແຕ່ຕົ້ນປີ 2007 ໂດຍຈັດແບ່ງວຽກອອກເປັນ 4 ໜ້າວຽກ :

1. ອ່ານທົບທວນ ກວດກາພິຈາລະນາຄືນທຸກຄຳສັບ ເພື່ອໃຫ້ຮູ້ແຈ້ງເຫັນຄັກ ຄຳຜິດ ຄຳຖືກ ຢ່າງຊັດເຈນ.
2. ຈັດສັບຮຽງລຳດັບສັບຄືນໃໝ່ໃນບາງບ່ອນ ບາງຕອນ ທີ່ເຫັນວ່າບໍ່ຖືກຕ້ອງຕາມຫຼັກ ການຮຽງຄຳທີ່ໄດ້ວາງໄວ້.
3. ໃຊ້ຕົວ " **ຣ** " ຂຽນຄຳສັບທີ່ຢືມມາຈາກພາສາຕ່າງປະເທດ ໂດຍສະເພາະຄຳທີ່ ອອກສຽງ "**ຣ**" (ທັບລີ້ນ) ຕົວຢ່າງ: ປາຣີ, ຣົງກາຣີ, ມະກະໂຣນີ, ເອັກຊະເຣ, ເຢຊູຄຣິດ ເປັນຕົ້ນ; ໂດຍອີງໃສ່ຫຼັກການໃຊ້ຕົວ " **ຣ** " ຂອງກະຊວງສຶກສາທິການໃນປັດຈຸບັນ.
4. ເພີ່ມຕື່ມຄຳສັບໃໝ່ເຂົ້າໃສ່ ຈຳນວນ 500 ຄຳ ເຊິ່ງຈະສ້າງໃຫ້ວັດຈະນານຸກົມນີ້ ບັນຈຸຄຳສັບໄດ້ປະມານ 22.000 ຄຳ.

ວຽກແກ້ໄຂປັບປຸງ ວັດຈະນານຸກົມ ໄດ້ສຳເລັດລຸລ່ວງໄປໂດຍດີ ໃນທ້າຍເດືອນມີນາ ປີ 2008. ຄ້ອມພໍດີໃນເວລາດຽວກັນນັ້ນ ທາງຄະນະນຳຫໍສະໝຸດແຫ່ງຊາດ ກໍ່ໄດ້ແຈ້ງຈຸດປະສົງມາຍັງ ຂ້າພະເຈົ້າວ່າ ຕ້ອງການຢາກພິມປຶ້ມວັດຈະນານຸກົມ ສະບັບປັບປຸງໃໝ່ ພາຍໃນສົກປີ 2008 ນີ້. ຂ້າພະເຈົ້າຕອບຕົກລົງເຫັນດີດອມ ດ້ວຍຄວາມພາກພູມໃຈ ເພາະວ່າມັນເປັນໂອກາດທີ່ດີ ທີ່ຈະໄດ້ ສະເໜີຜົນງານອັນທ້າທາຍນີ້ ຕໍ່ສັງຄົມອີກຄັ້ງໜຶ່ງ. ພ້ອມດຽວກັນນີ້ ກໍ່ເປັນການສ້າງເງື່ອນໄຂສະດວກ ໃຫ້ແກ່ຜູ້ອ່ານ-ຜູ້ຊົມໃຊ້ ໄດ້ມີທາງເລືອກ ແລະເປັນເຈົ້າຂອງສົມບັດທາງສະຕິປັນຍາຫຼາຍທາງຂຶ້ນຕື່ມ.

ຂໍຮຽນມາຍັງບັນດາທ່ານຜູ້ຊົງປັນຍາ ນັກພາສາສາດ ນັກປາດອາຈານ, ນັກຮຽນຮູ້-ນັກຄົ້ນຄວ້າ ນັກປັນຍາຊົນ ແລະ ຄົນຮັກພາສາລາວ ເພື່ອຊາບວ່າ ຜູ້ຄົ້ນຄວ້າຮຽບຮຽງ ວັດຈະນານຸກົມນັ້ນ ເປັນຜູ້ທີ່ຍັງບໍ່ໄດ້ຮຽນຮູ້ອີກຫຼາຍສິ່ງຫຼາຍຢ່າງ. ດັ່ງນັ້ນ ຈຶ່ງມັກລືມນັ້ນລືມນີ້ ຫຼືອັນນັ້ນ ຫຼືອັນນີ້ ແຕ່ບາດວ່າພິມສຳເລັດແລ້ວ ຈຶ່ງມາສະເດືອກສະດຸ້ງໃຈໃນຂໍ້ຂາດຕົກບົກພ່ອງເຫຼົ່ານັ້ນ. ສຳລັບ ຂ້າພະເຈົ້ານີ້ ກໍຄົງໜີບໍ່ພົ້ນຈາກລັກສະນະດັ່ງກ່າວນັ້ນເໝືອນກັນ. ດັ່ງນັ້ນ, ຈຶ່ງຂໍນ້ອມຮັບເອົາ ຄຳຕຳໜິຕິຊົມ ຄຳຕັກເຕືອນສິ່ງຂ່າວ ຈາກບັນດາທ່ານຜູ້ຫວັງດີ ດ້ວຍຄວາມຮູ້ບຸນຄຸນ ແລະ ຂອບອົກຂອບໃຈຢ່າງຈິງໃຈ ເພາະຈະໄດ້ນຳເອົາຂໍ້ຂາດຕົກບົກພ່ອງເຫຼົ່ານັ້ນ ໄປພິຈາລະນາປັບປຸງ ແກ້ໄຂໃຫ້ດີຂຶ້ນ ໃນການພິມຄັ້ງຕໍ່ໆໄປ.

ນະໂອກາດນີ້ ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຢ່າງລົ້ນເຫຼືອ ມາຍັງ ທ່ານນາງ ກົງເດືອນ ເນດຕະວົງ ຜູ້ອຳນວຍການ ຫໍສະໝຸດແຫ່ງຊາດ, ທ່ານນາງ ຫຼ້າຊ້ອຍ ແສງສຸວັນ ຫົວໜ້າພະແນກສົ່ງເສີມການອ່ານ ທີ່ມີນ້ຳໃຈຮັກຫອມພາສາຂອງຊາດ ແລະ ໄດ້ໃຊ້ສະຕິປັນຍາ ອົນຂວາຍຫາແຫຼ່ງທຶນມາຈັດພິມປຶ້ມ ວັດຈະນານຸກົມສະບັບປັບປຸງໃໝ່ ຂອງຂ້າພະເຈົ້າ ໃນຄັ້ງນີ້ ແລະ ພ້ອມນີ້ ກໍຂໍຂອບໃຈຢ່າງເລິກເຊິ່ງ ມາຍັງ ນາງ ຄຳມັກ ວົງສັກດາ ທີ່ໄດ້ອົດທົນພາກພຽນພະຍາຍາມ ຕີເອົ້າໜ້າ ແລະ ຕີແກ້ຄຳຜິດຫຼາຍຫຼົບຫຼາຍຕ່າວ ຢ່າງຂະຫຍັນດຸໝັ່ນ ຈົນເຮັດໃຫ້ ວັດຈະນານຸກົມ ສະບັບນີ້ ໄດ້ປະສົບຄວາມສຳເລັດຢ່າງຈົບງາມ.

ຂໍອວຍພອນອັນປະເສີດ ມາຍັງບັນດາທ່ານ ທີ່ມີສ່ວນປະກອບເຮັດໃຫ້ ວັດຈະນານຸກົມສະບັບນີ້ ໄດ້ຮັບການພິມຂຶ້ນອີກເປັນຄັ້ງທີສອງ ແລະມາຍັງທ່ານຜູ້ອ່ານທຸກຖ້ວນໜ້າ ຈົ່ງປະສົບຄວາມສຳເລັດ, ໂຊກໄຊ ຮຸ່ງເຮືອງໃສ ໃນຊີວິດໜ້າທີ່ການງານ. ຂໍຈົ່ງມີຄວາມສຸກຄວາມຈະເລີນ ມັ່ງຄັ່ງສົມບູນ ພູນເພີ່ມດ້ວຍຊັບສິນເງິນຄຳ ແລະ ເລີດລ້ຳດ້ວຍສະຕິປັນຍາ-ວິຊາຄວາມຮູ້ ຕະຫຼອດໄປເທີ້ນ.

❒ *ດວງສຸລິຍາ ໃຫ້ແສງສະຫວ່າງແກ່ໂລກໂລກາ*
*ວັດຈະນານຸກົມ ໃຫ້ແສງສະຫວ່າງສ້າງປັນຍາ*
*ຮູ້ພາສາລາວ ດາວທົ່ວຟ້າ ມາພ້ອມໜ້າສົມລະເສີນ*
*ຂໍທ່ານຜູ້ອ່ານ ຈົ່ງຈຳເລີນ-ຈຳເລີນ ຕະຫຼອດໄປເທີ້ນ!*

ນະຄອນຫຼວງວຽງຈັນ, ວັນທີ 23 ພຶດສະພາ 2008

*ດຣ. ທອງຄຳ ອ່ອນມະນີສອນ*

# ຫຼັກການໃຊ້ວັດຈະນານຸກົມ

## ກ. ການຮຽງລຳດັບ

1. **ພະຍັນຊະນະຮຽງໄວ້ຕາມລຳດັບຕົວອັກສອນ ດັ່ງນີ້ :**
ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ
ຟ ມ ຢ ລ (ຣ) ວ ຫ ຫງ ຫຍ ໜ ໝ ຫຼ ຫວ ອ ຮ.
( ຣ : ໃຊ້ຂຽນຄຳສັບທີ່ຢືມມາຈາກພາສາຕ່າງປະເທດ ເຊັ່ນ: ຣົງກາຣີ, ປາຣີ, ໂປຣຕີນ ...)

2. **ສະຫຼະທີ່ປະສົມກັບພະຍັນຊະນະ ຮຽງໄວ້ຕາມລຳດັບສະຫຼະ ດັ່ງນີ້ :**
xະ xາ xິ xີ xຶ xື xຸ xູ ເxະ ເx ແxະ ແx ໂxະ ໂx ເxາະ
xໍ ເxິ ເxີ ເxັຍ ເxຍ ເxືອ ເxືອ xົວະ xົວ ໄx ໃx ເxົາ xຳ.

3. ຄຳທີ່ບໍ່ມີຕົວສະກົດ ຮຽງໄວ້ກ່ອນຄຳທີ່ມີຕົວສະກົດ ໂດຍຈັດໃຫ້ໄປຕາມລຳດັບສະຫຼະ ທີ່ກ່າວໄວ້ໃນຂໍ້ 2, ສ່ວນຄຳທີ່ມີຕົວສະກົດນັ້ນ ຮຽງໄວ້ຕາມລຳດັບຕົວສະກົດ.

4. ຄຳທີ່ມີຕົວສະກົດ ຫຼືພະຍາງທີ່ມີຕົວສະກົດນັ້ນ ຕົວສະກົດຮຽງໄປຕາມລຳດັບພະຍັນຊະນະທີ່ໃຊ້ເປັນຕົວສະກົດ ເຊິ່ງຢູ່ກ່ອນ ແລະ ລຸນ ດັ່ງນີ້ : ກ ງ ຍ ດ ນ ບ ມ ວ. ໃນນີ້ ຕົວສະກົດຕົວໃດ ກໍຮຽງລຳດັບໄປຈົນສຸດສະຫຼະ ຕັ້ງແຕ່ xັ (ສະຫຼະ xະ) ໄປຈົນເຖິງ xົວ (ວ) ຍົກເວັ້ນແຕ່ສະຫຼະ ໄx ໃx ເxົາ xຳ ເຊິ່ງໃຊ້ສະກົດບໍ່ໄດ້.

5. ຄຳຈຳພວກພະຍັນຊະນະປະສົມ ເຊັ່ນ : ຫງ ຫຍ ໜ ໝ ຫຼ ຫວ ຮຽງໄວ້ຕາມລຳດັບຕໍ່ຈາກຄຳຈຳພວກອັກສອນສູງ ຄື ຄຳທີ່ຂຶ້ນຕົ້ນດ້ວຍຕົວ ຫ. ສ່ວນຄຳທີ່ເປັນຈຳພວກພະຍັນຊະນະຄວບນັ້ນ ຮຽງໄວ້ຕາມລຳດັບພະຍັນຊະນະ, ສະຫຼະ ແລະ ຕົວສະກົດ ຕົວຢ່າງ ຄຳວ່າ ກວານ, ກວານເຂົ້າຈ້ຳ, ກວ້ານ ຮຽງໄວ້ຕໍ່ຈາກ ຄຳວ່າກ້ອນ ເປັນຕົ້ນ.

6. ຄຳສັບທີ່ມີເຄົ້າມູນອັນດຽວກັນ ແຕ່ໃຊ້ພົຽນໄດ້ຫຼາຍຢ່າງ ເຊັ່ນ : ທີມະວັນ, ທີມະວານ, ທີມະພານ, ໄດ້ແປໄວ້ແຕ່ສັບເດີມ ສ່ວນຄຳພົຽນໄປນັ້ນບໍ່ໄດ້ແປ ແຕ່ໄດ້ບອກໃຫ້ເບິ່ງຄຳແປໃນສັບເດີມ.

7. ຄຳທີ່ມີຮູບສັບຢ່າງດຽວກັນ ແຕ່ມີຄວາມໝາຍໄດ້ຫຼາຍຢ່າງ ດັ່ງຄຳວ່າ ຂັບ ໄດ້ຂຽນເລກກຳກັບໄວ້ວ່າ ຂັບ 1 ຂັບ 2 ແລ້ວອະທິບາຍຄວາມໝາຍຂອງຄຳນັ້ນໆໄວ້.

8. ຄຳທີ່ນິຍົມໃຊ້ໃນກາບກອນ ໂຄງສານ ສ່ວນຫຼາຍມັກມີຄຳປະເພດດັ່ງຕໍ່ໄປນີ້ :
   **ກ.** ຄຳທີ່ຕື່ມ ອາ ອີ ໂອ ອິນ ຂ້າງທ້າຍ ເຊັ່ນ: ກາຍາ, ກາໂຍ, ກາຍີ, ກາຍິນ.
   **ຂ.** ຄຳທີ່ຕື່ມ ເ×ດ ຂ້າງທ້າຍ ເຊັ່ນ : ນະຄະເລດ, ພູເບດ, ມະຍຸເລດ.
   **ຄ.** ຄຳທີ່ຕື່ມ ອາກາບ ຂ້າງທ້າຍ ເຊັ່ນ : ທັດສະນາກາບ, ຈິນຕະນາກາບ, ຄະມະນາກາບ.
   **ງ.** ຄຳທີ່ຕື່ມ ຊາດ ຂ້າງທ້າຍ ເຊັ່ນ : ບຸບຜາຊາດ, ສຸຄັນທະຊາດ, ພຶກສາຊາດ.

ຄຳທັງຫຼາຍທີ່ຍົກມາອ້າງ ເປັນຕົວຢ່າງຂ້າງເທິງນີ້ ມີຄວາມໝາຍບໍ່ຕ່າງຈາກຄຳເດີມ ເຊິ່ງໄດ້ເອົາບັນຈຸໄວ້ໃນວັດຈະນານຸກົມນີ້ແລ້ວ. ດັ່ງນັ້ນ ຖ້າຫາກບໍ່ເຫັນຮູບສັບນັ້ນໆ ກໍໃຫ້ຊອກເບິ່ງຄຳເດີມ ເຊັ່ນ : ກາຍາ, ກາຍີ, ກາຍິນ ໃຫ້ເບິ່ງຄຳ "ກາຍ" ແລ້ວກໍຈະຮູ້ຄວາມໝາຍທັນທີໂລດ ເພາະວ່າມັນມີຄວາມໝາຍອັນດຽວກັນ.

## ຂ. <u>ປະຫວັດຂອງຄຳ</u>

1. ຄຳທີ່ໄດ້ເຄົ້າມາຈາກພາສາອື່ນ ໄດ້ບອກຊື່ພາສານັ້ນໆໄວ້ ຂ້າງສັບນັ້ນໂລດ ເຊິ່ງອະທິບາຍດ້ວຍອັກສອນຫຍໍ້ ໃນວົງເລັບ ເຊັ່ນ : (ປ.) ໝາຍຄວາມວ່າ ປາລີ, (ສ.) ໝາຍຄວາມວ່າ ສັນສະກຣິດ, (ປ. ສ.) ໝາຍຄວາມວ່າ ປາລີ ແລະ ສັນສະກຣິດ, (ຝ.) ໝາຍຄວາມວ່າຝຣັ່ງ.

2. ຄຳລາວເດີມ ຫຼືຄຳລາວແທ້ ແລະ ຄຳທີ່ບໍ່ຮູ້ຄັກແນ່ວ່າ ມາແຕ່ພາສາໃດ ບໍ່ໄດ້ບອກແຫຼ່ງທີ່ມາໄວ້ນຳ.

3. ໜັງສືວັນນະຄະດີທີ່ເອົາມາອ້າງອີງ ຫຼືທີ່ຖອດອອກມາເປັນຕົວຢ່າງ ໄດ້ບອກຊື່ເລື່ອງວັນນະຄະດີ ນັ້ນໆ ໄວ້ດ້ວຍ.

4. ຄຳໃນວົງເລັບທ້າຍ ຕົວຢ່າງທີ່ຍົກມາ ບອກຫຼັກຖານທີ່ອ້າງອີງ ເຊິ່ງມີຊື່ເຕັມດັ່ງນີ້ ຄື :

| | | | | | |
|---|---|---|---|---|---|
| (ກາ) | = | ກາລະເກດ | (ບ) | = | ຄຳບູຮານ |
| (ກາໄກ) | = | ທ້າວກາໄກ | (ປະເພນີ) | = | ປະເພນີລາວບູຮານ |
| (ກາເຜືອກ) | = | ທ້າວກາເຜືອກ | (ປັດເສນ) | = | ພະຍາປັດເສນ |
| (ຂຸນທຶງ) | = | ທ້າວຂຸນທຶງຂຸນເທືອງ | ( ປູ່ ) | = | ປູ່ສອນຫຼານ |
| (ຂຸນບູລົມ) | = | ພື້ນຂຸນບູລົມ | (ຜະຫຍາ) | = | ຄຳຜະຫຍາ |
| (ຂູລູ) | = | ຂູລູນາງອົ້ວ | (ຜາແດງ) | = | ຜາແດງນາງໄອ່ |
| (ຄຳສອນ) | = | ທ້າວຄຳສອນ | (ພາສິດ) | = | ພາສິດບູຮານລາວ |
| (ສຸດ) | = | ສຸດທີ່ອາວ | (ລິນ) | = | ທ້າວລິນທອງ |
| (ສິນ) | = | ສິນໄຊ | (ລຶບ) | = | ສານລຶບພະສູນ |
| (ສິມ) | = | ສິມທີ່ຄຶດ | (ເວດ) | = | ເວດສັນດອນ |
| (ສຽວ) | = | ສຽວສະຫວາດ | (ອິນ) | = | ອິນທິຍານສອນລູກ |
| (ຍ່າ) | = | ຍ່າສອນຫຼານ | (ໜ້າຜາກ) | = | ໜ້າຜາກໄກກະດົ້ນ |
| | | | (ຮຸ່ງ) | = | ທ້າວຮຸ່ງທ້າວເຈືອງ |

## ຄ. <u>ອັກສອນຫຍໍ້ທີ່ໃຊ້ໃນວັດຈະນານຸກົມ</u>

1. ອັກສອນຫຍໍ້ຢູ່ນອກວົງເລັບ ເຊິ່ງຮຽງໄວ້ຕໍ່ຈາກຄຳແຕ່ລະຄຳນັ້ນ ແມ່ນໃຊ້ສຳລັບບອກປະເພດຂອງຄຳ ຕາມຫຼັກໄວຍາກອນ ຄື :

| | | | |
|---|---|---|---|
| ກ. | ກິລິຍາ | = | ຄຳກຳມະ |
| ສ. | ສັບພະນາມ | = | ຄຳແທນນາມ, ຄຳແທນຊື່ |
| ສັນ. | ສັນທານ | = | ຄຳຕໍ່, ຄຳເຊື່ອມ |
| ນ. | ນາມ | = | ຄຳບອກຊື່, ຄຳນາມ |
| ບ. | ບຸບພະບົດ | = | ຄຳນຳໜ້ານາມ |
| ວ. | ວິເສດ | = | ຄຳຄຸນນາມ, ຄຳຂະຫຍາຍກຳມະ ຫຼືກິລິຍາ |
| ອຸ. | ອຸທານ | = | ຄຳອຸທານ |

2. ອັກສອນຫຍໍ້ໃນວົງເລັບ ເຊິ່ງຮຽງໄວ້ ຕໍ່ຈາກອັກສອນຫຍໍ້ບອກປະເພດຂອງຄຳນັ້ນ ແມ່ນໃຊ້ສຳລັບບອກທີ່ມາຂອງຄຳ ດັ່ງນີ້ :

(ຂ. ) = ຂະເໝນ

(ຈ. ) = ຈີນ

(ສ. ) = ສັນສະກຣິດ

(ທ. ) = ໄທ

(ປ. ) = ປາລີ

(ຝ. ) = ຝຣັ່ງ

(ຫວ. ) = ຫວຽດນາມ

(ອ. ) = ອັງກິດ

(ຣ. ) = ຣິນດູ

## . ກ .

**ກ.** ພະຍັນຊະນະຕົວທີ 1 ຂອງພະຍັນຊະນະທັງໝົດ ເປັນພວກອັກສອນກາງ ໃຊ້ເປັນຕົວສະກົດ ໃນແມ່ກັກ.

**ກະ ກ.** ກຳນົດ, ໝາຍ, ຄາດຄະເນ, ປະມານ. ການກະທຳທີ່ຕ້ອງກຳນົດວັນ, ເວລາ ແລະ ຈຳນວນ ເອີ້ນ ກະ.

**ກະ 1 ນ.** ເຕົ່າທະເລຊະນິດໜຶ່ງ ຫຼັງເປັນເກັດແຜ່ນໃຫຍ່ໆ ຊ້ອນກັນຄືກະເບື້ອງມຸງຫຼັງຄາ.

**ກະ 2 ວ.** ຄົນແກ່ ຄົນເຖົ້າ ມີປ່າມຕາມໂຕ ເອີ້ນຕົກກະ ຫຼືອອກມຶກ ອອກຊາງ ກໍ່ວ່າ.

**ກະກຸສັນໂທ ນ.** ຊື່ຂອງພະພຸດທະເຈົ້າອົງທີ່ 1 ທີ່ມາເກີດໃນພັດທະກັບນີ້ ເອີ້ນ ພະກະທຸສັນທະ.

**ກະກຸທ້າ ນ.** ເຄື່ອງໝາຍ ຄວາມເປັນພະເຈົ້າແຜ່ນດິນມີ 5 ຢ່າງຄື: 1. ມົງກຸດ, 2. ພະຂັນໄຊສີ, 3. ເສດຕະສັດ, 4. ແສ້ຈຳມອນ, 5. ສະຫຼອງພະບາດ (ເກີບຄຳ) ທັງຫ້ານີ້ ເອີ້ນ ກະກຸທ້າ ກຸກກຸທ້າ ຫຼື ກະກຸທະພັນທັງຫ້າ ກໍ່ເອີ້ນ.

**ກະກຸນ ນ.** ສະກຸນ, ເຊື້ອ, ສາຍ, ເຫຼົ່າ, ກໍ, ເຜົ່າພັນ ເອີ້ນ ກະກຸນ, ຕະກຸນ ກໍ່ວ່າ.

**ກະເກນ ກ.** ບັງຄັບ, ສັ່ງໃຫ້ເຮັດ.

**ກະກຽມ ນ.** ການຈັດແຈງ ຫຼືເຮັດໄວ້ ທຳໄວ້ລ່ວງໜ້າ ເອີ້ນກະກຽມ ຢ່າງວ່າ "ກຽມໃຈໄວ້ປະສົງແນວນາມຕ່າງ ເວົ້າຊູ້ຕ່າງບ້ານເມືອງຊິກວ້າງກວ່າຫຼັງ".

**ກະໄຄ ວ.** ດີກວ່າ ເອີ້ນກະໄຄ ເຊັ່ນ: ອັນນີ້ກະໄຄກວ່າອັນນັ້ນ, ເຈົ້າກະໄຄກວ່າຂ້ອຍ.

**ກະຈະ 1 ວ.** ແຈ່ມແຈ້ງ, ຊັດເຈນ, ຂາວຜ່ອງ, ລາຍຊັດເຈນ ເອີ້ນລາຍກະຈະ, ຂາວຜ່ອງ ເອີ້ນ ຂາວກະຈະ ຢ່າງວ່າ "ຂາວກະຈະປານນ້ຳຖ້ວມເຂົ້າ".

**ກະຈະ 2 ວ.** ຂາວ, ແຈ້ງ, ສິ່ງທີ່ແນມເຫັນໄດ້ແຈ່ມແຈ້ງບໍ່ມີຫຍັງປິດບັງ ເອີ້ນກະຈະ ເຊັ່ນ: ຂາວກະຈະ, ແຈ້ງກະຈະ.

**ກະຈາ ວ.** ເຄິ່ງໆ, ກາງໆ ເຊັ່ນ: ໝາກແຕງທີ່ເຄິ່ງສຸກເຄິ່ງດິບ ເອີ້ນໝາກແຕງກະຈາ, ເຄິ່ງຊາວນາ ເຄິ່ງຂຸນນາງ ເອີ້ນ ຂຸນກະຈາ ຢ່າງວ່າ "ຂຸນກະຈານີ້ ເປັນພໍ່ນາດີກວ່າ ເປັນພໍ່ນາເອື້ອມອິ່ມເຂົ້າ ຂຸນກະຈາເອື້ອມອິ່ມລົມ" (ປູ່).

**ກະຈິ ວ.** ຂຽວ, ອ່ອນ, ດອກໄມ້ທີ່ກຳລັງຈໍ່ໃໝ່, ດອກໄມ້ທີ່ມີລັກສະນະຂຽວງາມ ໜ້າຮັກ ເອີ້ນ ກະຈິ.

**ກະແຈະ 1 ນ.** ແປ້ງ, ຝຸ່ນຂະໝິ້ນ, ຝຸ່ນແກ່ນຈັນ ສິ່ງເຫຼົ່ານີ້ ຄົນບູຮານເຮັດໄວ້ ເພື່ອທາໂຕທາໜ້າ ຖ້າເຮັດດ້ວຍຝຸ່ນແກ່ນຈັນ ເອີ້ນ ກະແຈະຈັນ.

**ກະແຈະ 2 ນ.** ຊື່ແຂວງໜຶ່ງໃນປະເທດກຳພູຊາ ຢູ່ຕໍ່ແດນປະເທດລາວພາກໃຕ້.

**ກະແຈ 1 ນ.** ຫຼິ້ມ, ໄລກອນປະຕູເຮືອນ ຄົນບູຮານເຮັດໄລປະຕູດ້ວຍໄມ້ ເອີ້ນ ຫຼິ້ມປະຕູ ໄລປະຕູ, ກອນປະຕູ ກໍ່ວ່າ.

**ກະແຈ 2 ນ.** ກຸນແຈສຳລັບໃສ່ປະຕູເຮືອນປະຕູຕູ້ ເພື່ອບໍ່ໃຫ້ໄຂໄດ້.

**ກະແຈມື ນ.** ກະແຈທີ່ເຮັດເປັນວົງກົມ ສຳລັບໃສ່ແຂນຜູ້ເປັນຂະໂມຍລັກສິ່ງຂອງ ຫຼື

ຜູ້ທຳຄວາມຜິດຕໍ່ບ້ານເມືອງ.

**ກະເຈາະກະຈອກ ວ.** ອາການສະແດງຄວາມຊື່ນຊົມຍິນດີໃນເວລາເວົ້າ ຫຼືເຮັດສິ່ງໃດສິ່ງໜຶ່ງ ທີ່ພໍອົກພໍໃຈທີ່ສຸດ. "ຍາມເມື່ອຊົບລະຫາແຫ້ງ ວັງໜອງເຂີນຂາດ ມີດງາມມັນກະເຈາະກະຈອກເວົ້າ ຫົວລໍ້ຕໍ່ປາ" (ພາສິດ).

**ກະເຈີະກະເຈີ້ມ ວ.** ສະແດງອາການດີໃຈຈົນຫົວສະອຶກສະອ້ອຍ, ລ່າເລີງ ເອີ້ນກະເຈີະກະເຈີ້ມ ກະເຈາະກະຈອກ, ກະເຈີະກະເຈີກ ກໍ່ວ່າ.

**ກະເຈີ້ກະຈ້າ ວ.** ອາການສະແດງຄວາມພໍອົກພໍໃຈ ຍິ້ມແຍ້ມແຈ່ມໃສໃນການຕ້ອນຮັບແຂກ.

**ກະເຈົາ ນ.** ຊື່ປໍຊະນິດໜຶ່ງ ເອີ້ນປໍກະເຈົາ ໃຊ້ເປືອກເຮັດເຊືອກ ຫຼືວັດຖຸທີ່ຈຳເປັນ.

**ກະຈົກ 1 ນ.** ກະຈົກເງົາ, ກະຈົກສຳລັບແຍງເງົາ ໜ້າກະຈົກແວ່ນແຍງ ກໍ່ວ່າ.

**ກະຈົກ 2 ນ.** ແວ່ນສຳລັບສຸບຕາ ເອີ້ນກະຈົກຕາ ຫຼື ແວ່ນຕາ ກໍ່ວ່າ.

**ກະໂຈກ ນ.** ຊື່ກະບອກໄມ້ໄຜ່ ຕັດອັງຂໍ້ຂ້າງໜຶ່ງ ໃຊ້ສຳລັບຕັກນ້ຳກິນ ເອີ້ນກະໂຈກ.

**ກະໂຈມ 1 ນ.** ໝວກທີ່ເຮັດດ້ວຍຜ້າ ໃຊ້ສຳລັບໃສ່ຫົວເດັກນ້ອຍ ເພື່ອປ້ອງກັນແດດລົມ ເອີ້ນ ກະໂຈມຫົວ ວ່ອມກໍ່ວ່າ.

**ກະໂຈມ 2 ນ.** ໝວກສຳລັບປະດັບຫົວ ໃຊ້ເປັນເຄື່ອງຍົດຂອງພະເຈົ້າຊີວິດ ສະໄໝສັກດີນາ ຫຼື ເຈົ້ານາຍຜູ້ໃຫຍ່ ຫຼືພວກລີເກລະຄອນ ເອີ້ນ ກະໂຈມ ຢ່າງວ່າ "ກະໂຈມຄຳສຸບເກດເກົ້າ ເປັນເຈົ້າໃຫຍ່ກວ່າເພິ່ນທັງຫຼາຍ" (ເວດ).

**ກະໂຈມ 3 ນ.** ໝວກສີເຫຼືອງ ໝວກທີ່ໃຊ້ໃນເວລາ ຍາດໂຍມຫົດສົງພະເຖລະ ໃຫ້ມີສະມະນະສັກເປັນສຳເດັດ, ຍາຊາ, ຍາທ່ານ ໃຊ້ໝວກສີເຫຼືອງສຸບຫົວ ເວລາຫົດສົງແລ້ວ ໝວກນີ້ເອີ້ນກະໂຈມຫົວ ວ່ອມກໍ່ວ່າ.

**ກະໂຈມ 4 ນ.** ສະຖານທີ່ພັກຜ່ອນ ຫຼືບ່ອນຊົ່ວຄາວ ຂອງເຈົ້ານາຍ ເມື່ອອອກໄປຮົບເສິກ ຫຼືໄປລ່າເນື້ອ (ໂຫ່ເນື້ອ) ເຮັດເປັນຮູບຊົງຄືເຮືອນຍອດ (ຜາສາດ) ເອີ້ນກະໂຈມ.

**ກະຈອກ 1 ນ.** ຊື່ນົກຕົວນ້ອຍໆ ຊະນິດໜຶ່ງ ມັກເຮັດຮັງຕາມຫຼັງຄາເຮືອນ ເອີ້ນນົກກະຈອກ ນົກຈາບ ກໍ່ວ່າ.

**ກະຈອກ 2 ວ.** ເສດ, ເຫຼືອ, ສິ່ງຂອງທີ່ເຫຼືອໃຊ້ເລັກໆ ນ້ອຍໆ ເອີ້ນກະຈອກ ຫຼືຄົນມີຖານະຕ່ຳ ເອີ້ນ ຄົນກະຈອກ.

**ກະຈອກ 3 ວ.** ຂະເຢກ (ຂ.) ເອີ້ນມ້າຂາຂະເຢກ ວ່າ ມ້າກະຈອກ.

**ກະຈອກ 4 ນ.** ນົກຈອກ, ນົກຊະນິດນີ້ມີຄວາມພາກພຽນຫຼາຍ ມັກເຮັດຮັງງາມໆ ຫ້ອຍຢູ່ປາຍໄມ້, ຊື່ວັນນະຄະດີ ບູຮານລາວເລື່ອງໜຶ່ງ ເອີ້ນວ່າ ເລື່ອງນົກກະຈອກ.

**ກະຈັງ 1 ນ.** ລວດລາຍຊະນິດໜຶ່ງ ສຳລັບຕິດໂລງສົບ ເອີ້ນລາຍກະຈັງ ລາຍວັນແລ່ນ, ວັນລີແລ່ນ ກໍ່ວ່າ.

**ກະຈັງ 2 ນ.** ຊື່ລາຍແຕ້ມ ຫຼືລາຍສັບຊະນິດ

ໜຶ່ງ ໃຊ້ປະດັບຕາມຂອບຫຼືຖານທໍທຳມາດ ເອີ້ນ ລາຍກະຈັງ.

**ກະຈ່າງ ວ.** ສະຫວ່າງ, ສຸກໃສ, ຊັດເຈນ ແຈ່ມແຈ້ງ.

**ກະຈາຍ 1 ນ.** ຊື່ຫວ້ານແນວໜຶ່ງ ເອີ້ນວ່າ ຫວ້ານກະຈາຍ ມີພິດຮ້າຍແຮງ.

**ກະຈາຍ 2 ນ.** ໄມ້ພຸ່ມແນວໜຶ່ງ ລຳ ແລະກ້ານ ມີໜາມ ໝາກມີລັກສະນະກົມ ໃບເປັນແຫຼບ ໃຊ້ເຮັດສີດຳ..

**ກະຈາຍ 3 ກ.** ຢາຍອອກ, ຫວ່ານຊະອອກ, ແຈກອອກ.

**ກະຈັດ ວ.** ຖີ່, ບໍ່ຫ່າງ ເອີ້ນ ກະຈັດ, ກັດຈັດ ກໍ່ວ່າ ຢ່າງວ່າ: ຖີ່ກະຈັດ ຂີ້ຊ້າງລອດ ຫ່າງກ່າງຈ່າງຂີ້ມອດຄາ (ພາສິດ).

**ກະຈັດກະຈາຍ ວ.** ບໍ່ຮຽບຮ້ອຍ, ເກະກະ, ການວາງຂອງໄວ້ບໍ່ເປັນລະບຽບ ເອີ້ນ ກະຈັດກະຈາຍ, ຊະຊາຍຍັງຢາຍກໍ່ວ່າ.

**ກະຈາດ ນ.** ພາຊະນະທີ່ສານດ້ວຍໄມ້ໄຜ່ ຮູບເຕ້ຍ ປາກກວ້າງ ສຳລັບໃສ່ສິ່ງຂອງທີ່ບໍ່ໜັກເກີນໄປ.

**ກະຈັ້ນ ວ.** ສັ້ນ, ຂອງທີ່ນ້ອຍ ແລະສັ້ນ ເອີ້ນ ກະຈັ້ນ ຄຳເວົ້າສັ້ນ ເອີ້ນ ກະຈັ້ນ ກະຈັ້ນກະຈໍ້ກໍ່ວ່າ.

**ກະຈົ້ນ ນ.** ຊື່ສັດສີ່ຕີນຊະນິດໜຶ່ງ ຕົວນ້ອຍ ຂະໜາດກະແຕ ໜ້າແຫຼມ ເອີ້ນ ກະຈົ້ນ.

**ກະຈິນ ນ.** ຊື່ປາຊະນິດໜຶ່ງຈຳພວກປາເກັດ ໂຕລ້າຍປາຄໍ່ ໂຕກົມຫົວນ້ອຍ ສີມຸມ ເອີ້ນ ປາກະຈິນ.

**ກະຈອນ 1 ນ.** ເຄື່ອງປະດັບຫູຂອງຜູ້ສາວ ເຮັດດ້ວຍເງິນ, ຄຳ ເອີ້ນ ກະຈອນ ມີ 2 ຊະນິດ ຄື: ກະຈອນຈູມ ແລະກະຈອນຍອຍ.

**ກະຈອນ 2 ນ.** ຊື່ດອກໄມ້ຊະນິດໜຶ່ງ ເກີດຕາມປ່າເປັນໄມ້ພຸ່ມ ເອີ້ນ ຕົ້ນກະຈອນ.

**ກະຈອນຈູມ ນ.** ຕຸ້ມຫູທີ່ເຮັດເປັນດອກຈູມໆ ເໝືອນກັບດອກງິ້ວ ເອີ້ນ ກະຈອນຈູມ.

**ກະຈອນຍອຍ ນ.** ຕຸ້ມຫູທີ່ເຮັດເປັນຍອຍ ເປັນສ້ອຍລົງ ເອີ້ນ ກະຈອນຍອຍ ດັ່ງວ່າ "ກະຈອນຍອຍສ່ອງໜ້າ ຂາວແຈ້ງແຈ່ມຈັບ" (ຮຸ່ງ).

**ກະຈ້ອນ 1 ນ.** ຊື່ສັດນ້ອຍຊະນິດໜຶ່ງ ຈຳພວກກະຮອກ, ກະແຕ ເອີ້ນ ກະຈ້ອນ.

**ກະຈ້ອນ 2 ວ.** ນ້ອຍ, ຈ່ອຍ, ຜອມ ເຊັ່ນ ມ້າຕົວນ້ອຍ ແລະຜອມ ເອີ້ນມ້າກະຈ້ອນ ມ້າບັກຈ້ອນ ກໍ່ວ່າ.

**ກະຈ້ອນເບົ່າ ນ.** ຊື່ພັນໄມ້ຊະນິດໜຶ່ງ ເອີ້ນ ກະຈ້ອນເບົ່າ ໃຊ້ເຮັດຢາໄດ້.

**ກະຈວນ 1 ນ.** ແປ້ງ, ແປ້ງຫອມ ແປ້ງຫອມ ທີ່ເຮັດດ້ວຍຝຸ່ນຂະໝິ້ນ, ຝຸ່ນຈັນຫອມ.

**ກະຈວນ 2 ນ.** ຜົງ, ເກສອນ, ໄກສອນ ກໍ່ວ່າ ເຊັ່ນ: "ນາງກໍ່ເອົາກະຈວນຈັນ ຄັນທະລົດ ບົດແຫຼກຍິ່ງໜັກໜາ ໄປຖວາຍບູຊາພະພຸດທະເຈົ້າ" (ເວດ).

**ກະຈວນ 3 ກ.** ແຕກ, ໄໝ້, ລະອຽດ ຢ່າງວ່າ "ຕັດແຜ່ນພົ້ນ ຜາລ້ານມຸ່ນກະຈວນ" (ສິນ).

**ກະຈັບ ນ.** ຊື່ຜັກຊະນິດໜຶ່ງ ມີສອງແນວ ຄື: ກະຈັບນ້ອຍ ແລະ ກະຈັບໃຫຍ່ ໃບ ແລະ ໝາກ ໃຊ້ກິນເປັນອາຫານໄດ້.

**ກະຈັບ ນ.** ພືດລອຍນ້ຳຊະນິດໜຶ່ງ ມີໝາກ

ກິນໄດ້ ໃບໃຊ້ເປັນຜັກ ເອີ້ນ ໝາກກະຈັບ ໝາກຈັບ ກໍ່ວ່າ.

**ກະຈັບປີ່** **ນ.** ພິນສີ່ສາຍ ຊຸງ ກໍ່ວ່າ.

**ກະຈາບ** **ນ.** ຊື່ນົກນ້ອຍໆຊະນິດໜຶ່ງ ເອີ້ນ ນົກກະຈາບ ຢ່າງວ່າ ຈິບຈາບຈ້ອຍ ກະທາ ອຸ້ມອາບຂຽວ (ສິນ).

**ກະຈິບ** **ນ.** ຊື່ນົກນ້ອຍຊະນິດໜຶ່ງ ສຽງຮ້ອງຈິບໆ ເອີ້ນ ນົກກະຈິບ, ນົກຈິບກໍ່ວ່າ.

**ກະຈອບ** **ນ.** ເຄື່ອງມືສຳລັບໃຊ້ຂຸດດິນ ເອີ້ນ ກະຈອບ ສຽມກໍ່ວ່າ.

**ກະຈອບບ້ອງ** **ນ.** ສຽມ, ສຽມຂຸດມັນ ສຽມຂຸດ ມັນເອີ້ນ ກະຈອບບ້ອງ ຢ່າງວ່າ "ນາງກໍ່ຖື ເອົາຍັງກະຈອບບ້ອງ ເປັນເຄື່ອງຕ້ອງ ຂຸດຫົວມັນ" (ເວດ).

**ກະຈຽວ** **ນ.** ຊື່ພືດຊະນິດໜຶ່ງ ດອກເປັນຊໍ່ຄື ດອກຫວ້ານ ມັກເກີດໃນປ່າໂລ່ງທີ່ມີດິນຊຸ່ມ ໃຊ້ດອກລວກກິນກັບປົ່ນໄດ້ ເອີ້ນດອກກະຈຽວ ດັ່ງວ່າ "ຢ່າໄປເກັບດອກຫວ້ານບ້ານເພິ່ນ ມາຊົມ ໃຫ້ຄ່ອຍງອຍຊານເກັບ ດອກກະ ຈຽວແຄມຮົ້ວ" (ພາສິດ).

**ກະສາ 1** **ນ.** ຊື່ນົກຊະນິດໜຶ່ງ ຫາກິນປາຕາມ ຫາດຊາຍ ຮູບຮ່າງຄືນົກຍາງ ແຕ່ໂຕໃຫຍ່ ກວ່າ ເອີ້ນ ນົກກະສາ.

**ກະສາ 2** **ນ.** ຊື່ປໍຊະນິດໜຶ່ງ ປໍນີ້ເກີດຈາກ ຕົ້ນມອນໃຫຍ່ ເອີ້ນ ມອນສາ, ປໍທີ່ລອກ ຈາກມອນສານີ້ ເອີ້ນ ປໍສາ, ພັບທີ່ເຮັດດ້ວຍ ປໍສານີ້ ເອີ້ນ ເຈ້ຍສາ.

**ກະສາ 3** **ນ.** ຊື່ນົກຊະນິດໜຶ່ງ ຕົວໃຫຍ່ຄໍຍາວ ອົບສີພົ່ນ ມັກຊອກຫາກິນປາຢູ່ຕາມແຄມ ໜອງ, ບຶງ, ຫ້ວຍ, ຮ່ອງ ຫຼື ແຄມແມ່ນ້ຳ ໃຫຍ່.

**ກະສິ** **ນ.** ການໄຖນາ, ການປູກຝັງ.

**ກະສິກຳ** **ນ.** ການເຮັດໄຮ່ໄຖນາ, ວັດຖຸທີ່ພອຍ ໄດ້ຈາກການເຮັດໄຮ່ໄຖນາ ຫຼື ຜົນຜະລິດ ທີ່ໄດ້ຈາກການທຳໄຮ່ໄຖນາ.

**ກະສິກອນ** **ນ.** ຜູ້ເຮັດນາ, ຜູ້ເຮັດການປູກຝັງ.

**ກະສີລະ** **ນ.** (ປ.) ນ້ຳນົມ.

**ກະສີລະທາລາ** **ນ.** (ປ.) ອາການໄຫລອອກ ຂອງນ້ຳນົມ, ສາຍນ້ຳນົມ.

**ກະສື** **ນ.** ຊື່ຜີຈຳພວກໜຶ່ງ (ຕາມຄວາມເຊື່ອ ຄວາມເຂົ້າໃຈຂອງຄົນບູຮານ).

**ກະເສລາ** **ນ.** (ປ.) ນ້ຳນົມ, ນ້ຳນົມບູຮານ ເອີ້ນ ກະເສລາ ກະເສລານີ້ເປັນນ້ຳສັກສິດ ຜູ້ໃດ ໄດ້ກິນນ້ຳນີ້ຈະມີອາຍຸຍືນ ຢ່າງວ່າ "ລຸໂຊກ ສ້ອຍ ເຢັນຢູ່ເຮືອງຮົມຄືດູ່ພູມີຜາຍ ກະເສລາ ຮວາດລົງມາສ້າງ (ຮຸງ).

**ກະແສ 1** **ນ.** ສາຍນ້ຳ, ສາຍນ້ຳ ເອີ້ນກະແສ ນ້ຳ, ກະແສສິນກໍ່ວ່າ ຢ່າງວ່າ "ອິນກໍ່ຜາຍ ແຜ່ນ້ຳກະແສພົ້ນໂຜດຄືນ (ສິນ).

**ກະແສ 2** **ນ.** ແສ້ຕີມ້າ, ແສ້ຫວາຍສຳລັບຕີມ້າ ໃຫ້ແລ່ນໄວ ຢ່າງວ່າ "ເຊື້ອຊາດມ້າ ບໍ່ມີ ຫຼີກຫາງກະແສ" (ບູຮານ).

**ກະແສ 3** **ນ.** ອາການໄຫຼໄປ, ສາຍ ເຊັ່ນ ກະແສນ້ຳ ກະແສລົມ.

**ກະແສ 4** **ນ.** ຜ້າແພຊະນິດບາງໆ ເອີ້ນແພ ກະແສ.

**ກະສໍ** **ນ.** ຊື່ຕົ້ນມ່ວງຊະນິດໜຶ່ງ ໜ່ວຍນ້ອຍ ເອີ້ນ ຕົ້ນມ່ວງກະສໍ.

**ກະສັງ ນ.** ຊື່ຕົ້ນໄມ້ແນວໜຶ່ງ ເໝືອນກັບຕົ້ນຕູມ ໃບນ້ອຍມົນ ມີກິ່ນຂິວ ໝາກສຸກແລ້ວມີລົດສົ້ມ ກິນໄດ້.

**ກະສິງ ນ.** ນາງລະຄອນ, ນາງຟ້ອນ ເຊັ່ນ "ນາງກະສິງປະດັບ ແກວ່ງແພນເຟືອຍຟ້ອນ" (ສິນ).

**ກະໄສ ນ.** (ສ.) ຊື່ໂລກຝີໃນທ້ອງ ຫຼືປອດແຫ້ງ ເປັນພະຍາດເຮັດໃຫ້ຮ່າງກາຍຊຸດໂຊມ.

**ກະໄສການ ນ.** (ສ.) ເວລາສ້ຽງສູນແຫ່ງສິ່ງທັງປວງ, ເວລາໂລກດັບສູນ.

**ກະໄສຍະໂລກ ນ.** (ສ.) ຝີໃນທ້ອງ.

**ກະສາຍ ນ.** ນ້ຳປະສົມຢາ ທີ່ໝໍຢາພື້ນເມືອງລາວ ຖືເປັນຂອງສຳຄັນ ຄືນ້ຳຂີ້ສີກ, ນ້ຳຫົວກ້ວຍຕີບຈັນ, ນ້ຳຊາຍຄາ, ນ້ຳໝໍ່ໄມ້ສົ້ມ ... ຖ້າເປັນໄຂ້ຮ້ອນ, ໄຂ້ອອກມີກ, ອອກຊາງ, ອອກທຳທານ, ອອກຟານເທົ່າ ... ນ້ຳທີ່ຈະເອົາມາປະສົມຢາແມ່ນນ້ຳຊຸມນີ້ ເອີ້ນ ນ້ຳກະສາຍຢາ.

**ກະສາຍ ນ.** (ສ.) ການເປັນສີ່ຕິດຕໍ່, ຢາຕົ້ມ, ຢາປະສົມນ້ຳກິນ ລົດຝາດ.

**ກະສວຍ ນ.** ເຄື່ອງໃສ່ຫູອດ ສຳລັບຕ່ຳຫູກ, ຮູບຄືເຮືອ ກ້ານສວຍກໍ່ວ່າ.

**ກະສັດ ນ.** (ປ. ສ.) ພະເຈົ້າແຜ່ນດິນ.

**ກະສັດຕາທິລາດ ນ.** (ປ.) ພະເຈົ້າແຜ່ນດິນຜູ້ຍິ່ງໃຫຍ່.

**ກະສັດຕາໄທ້ ນ.** ພະເຈົ້າແຜ່ນດິນຜູ້ປະເສີດເລີດລ້ຳ.

**ກະສັດຕີ ນ.** (ສ.) ນາງກະສັດ.

**ກະເສດ 1 ນ.** (ປ. ສ.) ທີ່ດິນທົ່ງນາ, ໄຮ່ນາ, ເຂດສຳລັບເຮັດນາ ເອີ້ນ ເຂດກະເສດ.

**ກະເສດ 2 ນ.** ຜັກແນວໜຶ່ງ ເກີດຢູ່ນ້ຳ, ເປັນເຄືອ ໃບເໝືອນໃບກະຖິນ ລົດແຊບ.

**ກະເສດສຸມ ນ.** ການເຮັດນາ ຫຼືສວນ ດ້ວຍການໃຊ້ເຕັກນິກວິທະຍາການໃໝ່ ເພື່ອໃຫ້ໄດ້ຜົນຜະລິດຫຼາຍ, ການປູກພືດໃນເນື້ອທີ່ຈຳກັດ ແຕ່ໃຫ້ໄດ້ຜົນຫຼາຍ.

**ກະເສດຕະກຳ ນ.** (ສ.) ການເຮັດໄຮ່ໄຖນາ, ປູກພືດຜັກ, ລ້ຽງສັດ, ການຫາປາ, ການປ່າໄມ້.

**ກະເສດຕະກອນ ນ.** (ປ.) ຜູ້ທຳກະເສດຕະກຳ, (ຜູ້ກະທຳການໄຖ).

**ກະເສດຕະສາດ ນ.** (ສ.) ວິຊາວ່າດ້ວຍກະເສດຕະກຳ.

**ກະສັບ ກ.** ຄະນຶງເຖິງ, ຄິດຜູກພັນຢູ່, ມີໃຈຈົດຈໍ່ຢູ່ ເອີ້ນກະສັບ ຢ່າງວ່າ "ແລ້ວລ່ຳຢັ້ງມແປນເປົ່າເລີຍກະສັບ ກຸມພັນສະເຫວີຍໂພດລາຄີງ້ວນ" (ສິນ).

**ກະສັບ ກ.** ຄະນຶງ, ຄິດ, ຄຶດຮອດ, ຄຶດຢາກໄດ້, ມັກ ແລະ ກະວົນກະວາຍໃນການມາລົມ ເຊັ່ນ ກະສັບສະຫວາດ.

**ກະສິນ ນ.** (ປ.) ການຈະເລີນກຳມະຖານດ້ວຍການກຳນົດສິ່ງຕ່າງໆ ເປັນອາລົມ ຄືກຳນົດທາດສີ່ເປັນອາລົມ ກຳນົດສີສີ່ຢ່າງເປັນອາລົມ, ກຳນົດອາກາດສອງຢ່າງເປັນອາລົມ.

**ກະສຸນ ນ.** ລູກປືນ.

**ກະເສນ ນ.** ຊື່ໝາກມ່ວງຊະນິດໜຶ່ງ ໜ່ວຍໃຫຍ່.

**ກະສຽນ 1 ກ.** (ສ.) ຂຽນ, ຂຽນຄຳແປດ້ວຍ

ຕົວໜັງສືນ້ອຍໆ ໄວ້ກ້ອງສັບເດີມ.

**ກະສຽນ 2 ວ.** ສູນໄປ, ໝົດໄປ ເຊັ່ນ ໝົດກະສຽນອາຍຸລັດຖະການ.

**ກະສຽນອາຍຸ ນ.** (ສ.) ຜູ້ມີອາຍຸເຖິງເຂດແລ້ວ ຄື 18 ປີ ຂຶ້ນໄປ.

**ກະສວນ ນ.** ສ່ວນ, ແບບ, ແບບຕົວຢ່າງ ສຳລັບສ້າງ ຫຼື ເຮັດຂອງຈິງ ເຊັ່ນ ກະສວນເຮືອນ.

**ກະສາບ ນ.** (ປ.) ເງິນຕາ.

**ກະສອບ ນ.** ບັ້ງນ້ອຍໆ ດັ່ງສອບລູກປືນ, ເຄື່ອງສານ ຫຼືຕ່ຳດ້ວຍປ່ານ ຫຼືປໍ ສຳລັບໃສ່ເຂົ້າ ແລະຂອງອື່ນໆ.

**ກະເສມ** ( ເບິ່ງກະເສີມ )

**ກະເສີມ 1 ນ.** (ສ.) ຄວາມສຳລານ, ຄວາມສຸກສະບາຍ, ຄວາມຈະເລີນ.

**ກະເສີມ 2 ວ.** ສຳລານ, ສຳບາຍ, ສະບາຍ ດັ່ງວ່າ "ພູເບດສ້າງ ນະຄອນໃຫຍ່ຍູກະເສີມ" (ສິນ).

**ກະຊະ ນ.** ໄມ້ໄຜ່ປ່າຊະນິດໜຶ່ງ ມັກເກີດຢູ່ຕີນພູບ່ອນຊຸ່ມ ຫຼືຕາມແຄມນ້ຳ.

**ກະຊ້າ 1 ນ.** ພາຊະນະຊະນິດໜຶ່ງ ສານດ້ວຍໄມ້ໄຜ່ສຳລັບໃສ່ຂອງໄປຂາຍ ເອີ້ນ ກະຊ້າ ຢ່າງວ່າ "ຈວງຈັບຄູ່ ຂອງແພງທາງເທດ ສະເພົາພຸ້ນ ສັງເອົາໄປທ່ຽວຫ້ອຍ ຫູກະຊ້າຄວ່າຂາຍ" (ປັດເສນ).

**ກະຊ້າ 2 ນ.** ພາຊະນະຂະໜາດກາງ ສານດ້ວຍໄມ້ໄຜ່ຕາຫ່າງ ສຳລັບຜູ້ຍິງໃສ່ອາຫານຫາບໄປຈັງຫັນ ໄປເພນ ເພື່ອໄປຖວາຍພະສົງ ເອີ້ນ ກະຊ້າຈັງຫັນ.

**ກະຊ້າ 3 ນ.** ພາຊະນະຊະນິດນ້ອຍ ສານດ້ວຍໄມ້ໄຜ່ຕາຖີ່ ສຳລັບຜູ້ຍິງໃສ່ຫຼອດຝ້າຍ ຫຼື ຫຼອດໄໝ ໃນເວລາຕ່ຳຫູກ.

**ກະຊ້າ 4 ນ.** ພາຊະນະຊະນິດນ້ອຍໆ ສານດ້ວຍໄມ້ໄຜ່ຕາຖີ່ ໃຊ້ແທນແອບສຳລັບໃສ່ຂອງຄ້ຽວ ຂອງສູບ ຕ້ອນຮັບແຂກທີ່ມາຢາມກໍ່ໄດ້ ໃຊ້ສຳລັບຕົນເອງກໍ່ໄດ້ ເອີ້ນ ກະຊ້າພາກ.

**ກະແຊ 1 ນ.** ຊື່ການຫຼິ້ນແນວໜຶ່ງຂອງປະຊາຊົນລາວພາກເໜືອ.

**ກະແຊ 2 ນ.** ຊື່ພະຍາດເຈັບທ້ອງຢ່າງໜຶ່ງ ມີອາການເຈັບສຽບ.

**ກະໂຊ້ 1 ນ.** ເຄື່ອງໃຊ້ຂອງຊາວນາຊະນິດໜຶ່ງ ສານດ້ວຍໄມ້ໄຜ່ ເອີ້ນ ກະໂຊ້ສະນ້ຳ.

**ກະໂຊ້ 2 ນ.** ຊື່ແມງໄມ້ແນວໜຶ່ງ ຕົວນ້ອຍຢູ່ໃນນ້ຳ ຮູບຄືກະໂຊ້ສະນ້ຳ.

**ກະເຊີ ນ.** ພາຊະນະທີ່ສານດ້ວຍໄມ້ໄຜ່ ມີຮູບຮ່າງຄ້າຍຄືກະບຸງ ປາກກວ້າງ ກົ້ນຮອມ ໃຊ້ສຳລັບຕວງເຂົ້າເປືອກ ແລະ ເຂົ້າສານ, ອີກຢ່າງໜຶ່ງເປັນກະເຊີຊະນິດໃຫຍ່ ເອົາໃສ່ເທິງກວຽນ ໃຊ້ບັນທຸກເຂົ້າເປືອກ ເອີ້ນ ກະເຊີ.

**ກະເຊົາ ນ.** ກະຊ້າຢ່າງວ່າ "ສາຍກະເຊົາຫ້ອຍບ່າໄວ້ ກໍ່ມາຂູດຫູດຕົກເສຍ" (ເວດ).

**ກະເຊົ້າ 1 ນ.** ພາຊະນະສາຍດ້ວຍໄມ້ໄຜ່ ໃຊ້ໄມ້ໄຜ່ເປັນວົງວງ ໃຊ້ສຳລັບມ້ຽນສິ່ງຂອງ ມີເສື້ອຜ້າເປັນຕົ້ນ ຫ້ອຍໄວ້ພາຍໃນເຮືອນ.

**ກະເຊົ້າ 2 ນ.** ພາຊະນະສານດ້ວຍໄມ້ໄຜ່ ມີຫູ ໃຊ້ເຊືອກເປັນສາຍ ສຳລັບຫາບ ຫິ້ວ

ຫຼືຄອນ ກະເຊົາກໍ່ວ່າ ໃຊ້ໃສ່ສິ່ງຂອງໃນເວລາເຂົ້າປ່າ ໄປຫາໝາກໄມ້ຫົວມັນ ແລະ ຜັກຕ່າງໆ ຢ່າງວ່າ "ສຽມຂຸດມັນ ລືມປອດກະເຊົ້ານ້ອຍສອດສິບດີ" (ເວດ).

**ກະຊັກ ນ.** ຊື່ພູໜ່ວຍໜຶ່ງ ຢູ່ແຂວງຫຼວງພະບາງ ເອີ້ນວ່າ ພູກະຊັກ.

**ກະຊາກ ກ.** ດຶງທຶກມາໜຶດແຮງ, ຊາກມາໂດຍແຮງ.

**ກະຊັງ 1 ນ.** ເຄື່ອງມືສຳລັບຂັງປາ ເຮັດດ້ວຍໄມ້ໄຜ່ ເຫຼົາກົມໆ ແລ້ວຖັກດ້ວຍເຊືອກ ໃຊ້ຂັງປາໃນນ້ຳ (ເຮັດດ້ວຍໄມ້ແປ້ນກໍ່ມີ) ເອີ້ນ ກະຊັງຂັງປາ.

**ກະຊັງ 2 ນ.** ຄຸ ຫຼືປ່ອມທີ່ເຮັດດ້ວຍໄມ້ໄຜ່ສານເປັນຮູບກົມ ທາດ້ວຍຂີ້ຊີ ໃຊ້ຕັກນ້ຳໃນສ້າງ ເອີ້ນ ກະຊັງ, ປ່ອມຕັກນ້ຳກໍ່ວ່າ ເຊັ່ນ "ແມ່ຍິງ ແມ່ຍັງ ແມ່ກະຊັງກົ້ນຮົ່ວ" ... (ໂສກ).

**ກະຊັງ 3 ກ.** ກ່ຽວຂ້ອງ, ກ່ຽວຂ້ອງ ເອີ້ນ ກະຊັງ ຢ່າງວ່າ "ມີຄາວ່າ ສອງສິ່ງແກ້ວ ກະຊັງກົ້ງກ່ຽວມານແທ້ລີ" (ສິນ).

**ກະຊັງ 4 ກ.** ສະດຸ້ງຕື່ນໃນຂະນະທີ່ພວມຝັນ "ລາຕີຂ້ອນ ເລີຍກະຊັງ ສະດຸ້ງຕື່ນ" (ສິນ).

**ກະແຊງ ນ.** ຊື່ເຮືອໃຫຍ່ ເຮັດດ້ວຍໄມ້ ມີແປ້ນປ້ອງຂ້າງ ສຳລັບຍ່າງຖໍ່ ເອີ້ນວ່າ ເຮືອກະແຊງ ໃຊ້ສຳລັບຂົນສິນຄ້າ ຂຶ້ນລ່ອງຕາມລຳແມ່ຂອງ.

**ກະຊຽງ ນ.** ກັບຊຽງ ໄມ້ພາຍຍາວສຳລັບພາຍໃຫ້ເຮືອໄປ ເອີ້ນ ກະຊຽງ, ໄມ້ແຊວເຮືອ, ໄມ້ແຈ້ວເຮືອ ກໍ່ວ່າ.

**ກະຊວງ ນ.** ສະຖານທີ່ເຮັດການ ຂອງລັດຖະບານ ອັນເປັນບ່ອນໂຮມກິດຈະການຂອງປະເທດສ່ວນໜຶ່ງໆ ສູງກວ່າທະບວງຂຶ້ນໄປ ມີຫົວໜ້າເປັນລັດຖະມົນຕີ.

**ກະຊາຍ ນ.** ຜັກຊະນິດໜຶ່ງ ຢູ່ໃນຈຳພວກຫວ້ານ ມີກິ່ນຫອມ ຫົວ ແລະ ຮາກ ໃຊ້ເປັນອາຫານໄດ້.

**ກະຊອນ 1 ນ.** ເຄື່ອງຕອງນ້ຳ ສານດ້ວຍໄມ້ໄຜ່ກົ້ນແຫຼມ ແລະ ກົ້ນຍາວ ໃຊ້ຕອງນ້ຳກະທິ ນ້ຳປາແດກ ນ້ຳໝໍ້ນ້ອຍ ຢາບາງ ທີ່ຄັ້ນແລ້ວ.

**ກະຊອນ 2 ນ.** ຊື່ແມງໄມ້ຊະນິດໜຶ່ງ ເກີດຕາມໜອງນ້ຳ ໃຊ້ຂົ້ວກິນເປັນອາຫານໄດ້ ເອີ້ນ ແມງກະຊອນ ແມງຊອນກໍ່ວ່າ.

**ກະຊິບ ກ.** ເວົ້າສິ່ມໃສ່ຫູ, ເວົ້າຄ່ອຍໆ.

**ກະຊິບກະຊາບ ວ.** ອາການເວົ້າສິ່ມໃສ່ຫູຄ່ອຍໆ ທັງຟັ່ງຟ້າວ.

**ກະຊາມ 1 ວ.** ເຖິງຍາມ, ກະເທີບ ຢ່າງວ່າ "ເດືອນ 12 ມາຮອດແລ້ວ ຜໍກະຊາມໄຂ້ສັ່ນ ປີນີ້ເດືອນຍີ່ມາແລ່ນຮ້ອນ ເດືອນ 5 ຕ່າວໜາວ" (ລືບ).

**ກະຊາມ 2 ນ.** ພາຊະນະປາກບານ ເຮັດດ້ວຍໂລຫະສຳລັບໃສ່ນ້ຳລ້າງຜັກ, ໃຊ້ສຳລັບຊັກເຄື່ອງ ເຊັ່ນ ກະຊາມເຫຼັກ ກະຊາມຢາງ.

**ກະຍະ ນ.** ໄລຍະ, ລະຍະ, ເວລາ, ການເຮັດການທຳທີ່ມີເວລາຢຸດພັກຜ່ອນ ເອີ້ນກະຍະ ລະຍະກໍ່ວ່າ ເຊັ່ນ ເຮັດວຽກໜັກບໍ່ໄດ້ກະຍະ ຫຼືລະຍະ.

**ກະຍາຫານ ນ.** ເຄື່ອງກິນ, ອາຫານ.

**ກະຍ່າ ນ.** ຊື່ຜັກຊະນິດໜຶ່ງ ເກີດຕາມແຄມປ່າ ເປັນຕົ້ນນ້ອຍໆ ມີໜາມ ດອກສີເຫຼືອງ ເຮືອ ມີກິ່ນຫອມລົດສົ້ມໆ ກິນກັບຊຸບໜໍ່ໄມ້ ເອີ້ນຜັກກະຍ່າ ຜັກຂະຍ່າ ຜັກກາດຍ່າກໍ່ວ່າ.

**ກະຍື ນ.** ໂລກຫືດ, ຊື່ໂລກຊະນິດໜຶ່ງກ່ຽວກັບ ອີ່ສະເຫຼດ ຫຼືອີ່ກະເທີ່ ເວລາເປັນຫາຍໃຈ ບໍ່ສະດວກ ເອີ້ນໂລກກະຍື, ຄະຍື, ອີ້ຄະຍືກໍ່ວ່າ.

**ກະຍູງ ນ.** ໄມ້ເນື້ອແຂງຊະນິດໜຶ່ງ ແກ່ນສີດຳ ແດງ ເປັນໄມ້ມີຄຸນນະພາບສູງ ຊັ້ນທີ 1 ໄມ້ຂະຍູງກໍ່ວ່າ.

**ກະແຍງ 1 ນ.** ຊື່ປາບໍ່ມີເກັດຊະນິດໜຶ່ງ ເກີດໃນ ນ້ຳຈືດ ມັກຢູ່ຕາມຫ້ວຍຕາມໜອງ ເອີ້ນ ປາກະແຍງ, ປາຂະແຍງ ກໍ່ວ່າ.

**ກະແຍງ 2 ນ.** ຊື່ຜັກຊະນິດໜຶ່ງ ເກີດຕາມ ທົ່ງນາ ຫຼືທີ່ຕ່ຳ ມີກິ່ນຫອມ ໃຊ້ແກງໃສ່ ໜໍ່ໄມ້ຫອມດີ ເອີ້ນຜັກກະແຍງ ຜັກຂະແຍງ ກໍ່ວ່າ.

**ກະແຍງໂລ ນ.** ປາກະແຍງແນວຕົວໃຫຍ່.

**ກະຍຸ້ມກະຍ້ວຍ ວ.** ການກິນເປື້ອນເປິ, ມູມໆ ມາມໆ ບໍ່ສະອາດ ເອີ້ນ ເຮັດກະຍຸ້ມກະຍ້ວຍ ມະຍຸ້ມມະຍ້ວຍ ກໍ່ວ່າ.

**ກະຍຸ້ມກະແຍ້ມ ວ.** ການຍິ້ມ, ຄວາມລະອາຍ ເອີ້ນ ກະຍຸ້ມກະແຍ້ມ.

**ກະໂຍມ 1 ນ.** ລູກສິດວັດທີ່ບໍ່ໄດ້ບວດ ແຕ່ຢູ່ ອາໄສວັດ ແລະ ເປັນຜູ້ຮັບໃຊ້ພະເນນ ເອີ້ນ ກະໂຍມ, ຄະໂຍມ, ຂະໂຍມວັດກໍ່ວ່າ.

**ກະໂຍມ 2 ນ.** ຄົນຊາວບ້ານ (ເປັນຄຳພະສົງ ເອີ້ນຊາວບ້ານ) ຍາດໂຍມກໍ່ວ່າ.

**ກະຍອມ ນ.** ຊື່ໄມ້ຊະນິດໜຶ່ງ ມີດອກຫອມ ບານໃນລະດູແລ້ງ ເອີ້ນ ຕົ້ນກະຍອມ, ຂະຍອມ, ຄະຍອມ ຜະຍອມ ກໍ່ວ່າ.

**ກະເຍີມ ວ.** ສິ່ງທີ່ເປັນຕາມສະພາບ ຫຼືປ່ອຍໄວ້ ຕາມສະພາບຂອງມັນ ຕາມແຕ່ຈະເປັນ.

**ກະດີ ນ.** (ປ.) ເຮືອນຂອງພິກຂຸສາມະເນນ.

**ກະດີ່ ນ.** ປານ້ອຍຊະນິດໜຶ່ງ ອາໄສຢູ່ໃນນ້ຳຈືດ ມີຄີທີ່ທ້ອງຍາວ ແລະ ມີຄີຄູ່ຢູ່ບ່ອນໜ້າອົກ ເອີ້ນປາກະດີ່.

**ກະດໍ 1 ນ.** (ຂ.) ອະໄວຍະວະເພດຂອງເພດ ຊາຍ ເອີ້ນ ກະດໍ.

**ກະດໍ 2 ນ.** ສິ່ງທີ່ມີລັກສະນະຄ້າຍຄືອະໄວ ຍະວະລັບຂອງເພດຊາຍ ເຊັ່ນ ນົກສຳລັບ ສັບແກບປືນ ເອີ້ນ ກະດໍປືນ.

**ກະດໍ 3 ນ.** ອະໄລຍະວະເພດຂອງຄົນຊາຍ ແລະ ສັດຕົວຜູ້ ໄລ ຫຼືເດືອຍ ສຳລັບສຸບໃສ່ ປ່ອງຮູໃດໜຶ່ງ ເພື່ອເຮັດໃຫ້ວັດຖຸສອງອັນ ແນບແໜ້ນເຂົ້າໃສ່ກັນ.

**ກະດົ້ ວ.** ໂພດ, ໂພດກາຍ, ເຫຼືອ.

**ກະໄດ ນ.** ບັນໄດ, ອັ້ນໄດ, ໄມ້ທີ່ເຮັດເປັນຂັ້ນໆ ສຳລັບກ່າຍຂຶ້ນລົງເຮືອນ ຫຼືຊານ ເອີ້ນ ກະໄດ, ອັ້ນໄດ, ຄັນໄດ, ບັນໄດ ກໍ່ວ່າ.

**ກະໄດແຫ ນ.** ເຊືອກທີ່ມັດຕິດຈອມແຫ ສຳລັບ ດຶງແຫຂຶ້ນ ເມື່ອຫວ່ານລົງແລ້ວ.

**ກະໄດລີງ ນ.** ໄມ້ເຄືອຊະນິດໜຶ່ງ ເຄືອຄົດລ້ຽວ ບິດບ້ຽວໄປມາ ດອກນ້ອຍສີຂາວ ແລະ ເປັນຄູ່.

**ກະເດົາ ນ.** ໄມ້ຊະນິດໜຶ່ງ ເນື້ອແຂງ ເປັນຢາ, ໃບອ່ອນ ແລະ ດອກໃຊ້ເປັນອາຫານໄດ້.

**ກະເດົ້າ ກ.** ເຮັດກົ້ນຂຶ້ນໆລົງໆ ເອີ້ນ ກະເດົ້າ,

ເດົ້າ ກໍ່ວ່າ.

**ກະດາກ** **ກ.** ລະອາຍໃຈ, ຈຽມໃຈ.

**ກະດິກ** **ກ.** ເໜັງ, ຕີງ, ໄຫວ, ເຄື່ອນໄຫວ, ເໜັງຕີງ, ເຮັດປາຍມື ຫຼືປາຍຕີນໃຫ້ໄຫວ, ໃຫ້ຕີງ ເອີ້ນ ກະດິກ, ຕີງ ກໍ່ວ່າ ຢ່າງວ່າ "ກົກບໍ່ເຕື້ອງ ຕີງຕາຍຕັ້ງແຕ່ງ່າ ງ່າບໍ່ເຕື້ອງ ໄປເຫຼື້ອງຕັ້ງແຕ່ໃບ" (ພາສິດ).

**ກະດິກກະດົ້ນ** **ກ.** ສະແດງກິລິຍາເໜັງຕີງໄປມາ, ທັງເວົ້າທັງຫົວສະອິກສະອ້ອຍດ້ວຍຄວາມດີໃຈ.

**ກະດູກ** **1** **ນ.** ໂຄງຮ່າງກາຍຂອງຄົນ ແລະ ສັດ ທີ່ເປັນສ່ວນແຂງແກ່ນ.

**ກະດູກ** **2** **ນ.** ຊື່ພັນໄມ້ຈຳພວກໜຶ່ງ ມີຫຼາຍຊະນິດ ໃຊ້ເຮັດຢາໄດ້ ເອີ້ນ ກະດູກ ດູກ ກໍ່ວ່າ ເຊັ່ນ ດູກເຂົ້າ, ດູກຫີນ, ດູກອີ່ງ, ດູກຜີ, ດູກດ້ານ, ດູກໄກ່ດຳ.

**ກະດູກ** **3** **ນ.** ເຄື່ອງໃຊ້ທີ່ເຮັດຂຶ້ນດ້ວຍເຫຼັກ ຫຼືໄມ້ ໃຊ້ວາງແນບທ້ອງເຮືອ ເພື່ອໃຫ້ລຳເຮືອແຂງແຮງ ເອີ້ນ ດູກເຮືອ.

**ກະດູກແຂວນຄໍ** **ນ.** ຄຳສັ່ງສອນທີ່ສຳຄັນ ພໍ່ແມ່ມັກສອນເນັ້ນໜັກ ໃຫ້ລູກຈື່ຈຳຄຳສັ່ງສອນໄວ້ຕະຫຼອດຊີວິດ ຢ່າງວ່າ "ຊີ້ນບໍ່ໄດ້ກິນ ໜັງບໍ່ໄດ້ນັ່ງ ກະດູກແຂວນຄໍ" (ພາສິດ).

**ກະໂດກ** **ວ.** ຜຸ, ເປື່ອຍ ໂດກ ກໍ່ວ່າ.

**ກະດ່າງກະດາວ** **ວ.** ມີສີຂາວ ແລະ ດຳ ສັບປົນກັນໄປທົ່ວ, ມີຫຼາຍສີຕິດແປດປົນເປກັນ.

**ກະດ້າງ** **1** **ນ.** ຊື່ເຫັດຊະນິດໜຶ່ງ ເກີດຕາມຂອນໄມ້ທີ່ແຫ້ງ ເອີ້ນ ເຫັດກະດ້າງ ຢ່າງວ່າ "ເຫັດກະດ້າງຈັບຂ້າງຂອນຈິກ".

**ກະດ້າງ** **2** **ວ.** ແຂງ, ບໍ່ອ່ອນ, ຄົນທີ່ເວົ້າບໍ່ໄດ້ເອີ້ນ ລີ້ນກະດ້າງ ຢ່າງວ່າ "ເປັນສັງນ້ອງຈອມພະນາງມາບໍ່ປາກ ຫຼື ແມ່ນ້ອງປ້ອນຊີ້ນແຂ້ ຄາງກະແຕເຈົ້າບໍ່ລັ່ນ ແມ່ນ້ອງປ້ອນຊີ້ນຊ້າງ ຄາງກະດ້າງ ປາກບໍ່ເປັນຊັ້ນບໍ" (ຜະຫຍາ).

**ກະດ້າງ** **3** **ວ.** ຄົນທີ່ບໍ່ຟັງຄຳສັ່ງສອນຂອງພໍ່ແມ່ ຄູອາຈານ ເອີ້ນ ຄົນກະດ້າງ ຫຼືຄົນແຂງກະດ້າງ ກໍ່ວ່າ.

**ກະດິງ** **1** **ນ.** ຊື່ພັນໄມ້ເຄືອຊະນິດໜຶ່ງ ຈຳພວກເຄືອໝາກບວບ ມີຝັກຍາວໃຊ້ເປັນອາຫານ ຕົ້ມແກງກິນໄດ້ ເອີ້ນ ໝາກກະດິງ.

**ກະດິງ** **2** **ນ.** ເຄື່ອງໂລຫະ ທີ່ຫຼໍ່ດ້ວຍເຫຼັກ ທອງແດງ ທອງເຫຼືອງ ມີລູກຟັດແຂວນຢູ່ທາງໃນລູກນ້ອຍໆ ເອີ້ນ ໝາກກະດິງ ສຳລັບແຂວນຄໍງົວ ຄໍຄວາຍ ຫຼືແຂວນໄວ້ທີ່ຍອດຊໍ່ຟ້າ ຫຼື ໂງ່ສົມ ຫຼື ຍອດຜາສາດ ລາຊະມົນທຽນ ຂອງ ກະສັດແຕ່ກ່ອນ ຢ່າງວ່າ "ກະດິງທອງຫ້າວແຂວນນຳຄໍໂງ່ ລົມພັດຕ້ອງກະດິງນ້ອຍແຮ່ງດັງ ( ບ. )

**ກະດິງ** **3** **ນ.** ຊື່ພູໜ່ວຍໜຶ່ງໃນເຂດອຳເພີພູກະດິງ ຈັງຫວັດເລີຍ ປະເທດໄທ.

**ກະດິງ** **4** **ນ.** ຊື່ລົມຊະນິດໜຶ່ງ ຄ້າຍລົມຫົວກຸດພັດແຮງ ເວລາພັດມາຈະໄດ້ຍິນສຽງດັງເໝືອນສຽງກະດິງ ເອີ້ນລົມກະດິງ.

**ກະດິງ** **5** **ນ.** ຊື່ແມ່ນ້ຳສາຍໜຶ່ງ ໄຫຼຕົກນ້ຳຂອງທີ່ໃຕ້ເມືອງປາກຊັນ ແຂວງບໍລິຄຳໄຊ ເອີ້ນນ້ຳກະດິງ.

**ກະດິງຫ້າວ** **ນ.** ກະດິງທີ່ເຮັດດ້ວຍທອງຫ້າວ

ຢ່າງວ່າ "ທໍຊໍ່ຟ້າກະດິງທ້າວທິ່ງແຂວນ".

**ກະດຸ້ງ ນ.** ເຄື່ອງມືຫາປາ ສານດ້ວຍເສັ້ນປ່ານ ຫຼືສາຍນີລົງແລບ ເປັນຜືນຮູບສີ່ແຈ ມີຂາ ສຸບໃສ່ທັງທີ່ແຈ ແລະ ມີຄັນສຳລັບຍົກ, ສະດຸ້ງ ກໍ່ວ່າ.

**ກະແດ້ງ 1 ວ.** ຫ່ຽວແຫ້ງ, ບໍ່ມີ, ຍິງທີ່ບໍ່ເຄີຍ ມີຜົວ ເອີ້ນ ແມ່ກະແດ້ງ ຫຼືມີຜົວ ແຕ່ບໍ່ມີ ລູກ ເອີ້ນແມ່ກະແດ້ງ ພໍ່ກະແດ້ງ.

**ກະແດ້ງ 2 ວ.** ກັນດານ, ອັດຕະຄັດ, ອັດສົນ ບ້ານເມືອງທີ່ອັດຕະຄັດອັດສົນ ເຕັມໄປ ດ້ວຍໂລກໄພໄຂ້ເຈັບ ເອີ້ນ ບ້ານກະແດ້ງ.

**ກະດົ້ງ 1 ນ.** ພາຊະນະສານດ້ວຍໄມ້ໄຜ່ ຮູບແບນຂອບກົມ ໃຊ້ສຳລັບຕາກປາ ຕາກ ສິ່ງຂອງຕ່າງໆ ບາງທີໃຊ້ເປັນພາເຂົ້າ ກໍ່ໄດ້.

**ກະດົ້ງ 2 ນ.** ກະດົ້ງຝັດເຂົ້າ ສານດ້ວຍຕິວໄມ້ ໄຜ່ ເຮັດໃຫ້ໜັ້ນຄົງ ຂະໜາດທໍ່ກະດົ້ງ ທຳມະດາ ໃຊ້ສຳລັບຝັດເຂົ້າ ເອີ້ນ ກະດົ້ງ ຝັດເຂົ້າ.

**ກະດົ້ງ 3 ນ.** ກະດົ້ງທີ່ສານດ້ວຍໄມ້ໄຜ່ ມີຂະ ໜາດທໍ່ກະດົ້ງທຳມະດາ ໃຊ້ລ້ຽງມ້ອນ ເອີ້ນ ກະດົ້ງມ້ອນ ຢ່າງວ່າ "ຊາຕາມາຕົກນີ້ ຈຳໜີຊິຂໍຢູ່ ແຜ່ນດິນທໍ່ໝາກບ້າ ແຜ່ນຟ້າທໍ່ ດົ້ງມ້ອນ ຊິຂໍມ້ຽນກະດູກດອມ" (ຜະຫຍາ).

**ກະໂດງ ນ.** ເສົາສູງທີ່ຕັ້ງຢູ່ໃນເຮືອໃບ ຫຼືເຮືອ ສຳເພົາ ສຳລັບຜູກຜ້າໃບ ເພື່ອໃຫ້ເຮືອ ແລ່ນໄປຕາມແຮງລົມ.

**ກະດອງ ນ.** ອະໄວຍະວະສ່ວນແຂງ ທີ່ຫຸ້ມ ຕົວສັດ ເຊັ່ນ ຫຸ້ມເຕົ່າ ເອີ້ນ ກະດອງເຕົ່າ ຫຸ້ມກະປູ ເອີ້ນ ກະດອງປູ ອອງກະປູກໍ່ວ່າ.

**ກະດຽງ ນ.** ຜັກແນວໜຶ່ງ ເກີດຕາມໄຮ່ນາ ໃນລະດູຝົນ ໃບເປັນສ້ອຍອອກຈາກລຳ ແລະກ້ານ ມີລົດຂົມນົວ ໃຊ້ກິນກັບປົ່ນປາ.

**ກະເດື່ອງ ກ.** ສັ່ນ, ສະເທືອນ, ເດື່ອງ, ໜັກລົງ ຂ້າງໜຶ່ງ, ຫວັ່ນໄຫວ, ເຮັດໃຫ້ເກີດຄວາມ ຕື່ນເຕັ້ນ ດັ່ງວ່າ "ຟ້າກະເດື່ອງລົ້ນ ເທວະ ທ້າວຜໍ່ຄອຍ" (ສິນ).

**ກະດາຍ ວ.** ເປັນຄຳຕໍ່ທ້າຍ ເພື່ອເນັ້ນໃຫ້ ປະໂຫຍກຄຳເວົ້າທີ່ຢູ່ໜ້າ ມີຄວາມໜັກ ແໜ້ນຂຶ້ນຕື່ມ ເຊັ່ນ "ແມ່ກະດາຍ! ຄວນອີດູ ຕົນລາວແນ່".

**ກະດັດ ວ.** ໂພດ, ເຫຼືອເກີນ ກະດັດກະດໍ້ ກໍ່ວ່າ.

**ກະດາດ ນ.** ວັດຖຸເປັນແຜ່ນບາງໆ ເຮັດດ້ວຍ ເປືອກໄມ້ ເຊັ່ນ ເປືອກຂ່ອຍ ເປືອກປໍເຕົ່າໄຫ້ ເປືອກປໍສາ ເຟືອງເຂົ້າ ... ມາບົດແລ້ວ ເຮັດຕາມກຳມະວິທີຂອງຊ່າງ ກາຍມາ ເປັນແຜ່ນ ໆ ຕາມຄວາມຕ້ອງການ, ເຈ້ຍ ກໍ່ວ່າ.

**ກະດາດແກ້ວ ນ.** ເຈ້ຍທີ່ເປັນແຜ່ນບາງໆ ແລະ ໃສ.

**ກະດາດຊາຍ ນ.** ເຈ້ຍສຳລັບຂັດຖູຂອງໃຫ້ກ້ຽງ.

**ກະໂດດ ກ.** ເຕັ້ນ, ໂດດ ເຊັ່ນ ກະໂດດຂ້າມຮ່ອງ.

**ກະເດີດ ນ.** ປາແນວໜຶ່ງ ເປັນປາມີເກັດ ໂຕນ້ອຍແປ ສອງຂ້າງມີເມັດສີດຳ ມີໜວດ ຢູ່ທ້ອງຍາວ ເອີ້ນ ປາກະເດີດ.

**ກະດັນ 1 ນ.** ຕົ້ນໄມ້ຊະນິດໜຶ່ງ ໃບນ້ອຍຍາວ ມີລົດສົ້ມ ມັກເກີດຕາມແຄມນ້ຳເຊ, ຫ້ວຍ, ຮ່ອງ, ບຸ່ງ, ໃຊ້ກິນກັບກ້ອຍກຸ້ງ.

**ກະດັນ 2 ນ.** ຊີ້ນ ຫຼືນວນໝາກໄມ້ ທີ່ເປັນກ້ອນແຂງ.

**ວ.** ເປັນກ້ອນແຂງ.

**ກະດັນຂາ ນ.** ພະຍາດຊະນິດໜຶ່ງ ເປັນກ້ອນແຂງຢູ່ແອບແອຂາ ໝາກກະດັນຂາໃຄ່ກໍ່ວ່າ.

**ກະດັນງາ ນ.** ຕົ້ນໄມ້ດອກແນວໜຶ່ງ ດອກເປັນກາບສ້ອຍສີເຫຼືອງ ກິ່ນຫອມ ມີ 2 ແນວ ຄື: ກະດັນງາບ້ານ ແລະ ກະດັນງາປ່າ.

**ກະດານ ນ.** ໄມ້ທີ່ຖາກ ຫຼື ເລື່ອຍເປັນແຜ່ນໃຫຍ່ ເອີ້ນ ໄມ້ກະດານ.

**ກະດານດຳ ນ.** ກະດານທີ່ເຮັດດ້ວຍໄມ້ແປ້ນແຜ່ນໃຫຍ່ໆ ຫຼື ແປ້ນຫຼາຍແຜ່ນມາຕໍ່ກັນທາດ້ວຍສີດຳ ໃຊ້ຂຽນໜັງສື ຫຼືສອນໜັງສື ເອີ້ນກະດານດຳ.

**ກະດານຫົວ ນ.** ກະດູກຫົວ ເອີ້ນກະດານຫົວ ຢ່າງວ່າ "ປືນພະຫຼຽງມ້າງ ກະດານຫົວ ເຕັ້ນໄຕ່ ຊວງຟ່າງຮ້າຍໄກວກ້າວແກວ່ງທຸລີ" (ສິນ).

**ກະດານຫີນ ນ.** ແຜ່ນຫີນ, ພະລານຫີນ.

**ກະເດັນ ກ.** ເຄື່ອນ ຫຼືແຕກ ຫຼື ຟົ້ງຈາກທີ່ເກົ່າອອກໄປໂດຍໄວ ຢ່າງວ່າ "ໄຟກະເດັນຟົ້ງ ຕົກລົງພາຍລຸ່ມ ມຸດມອດໄໝ້ເຮືອນຢ້າວມຸ່ນວາຍ" (ຜາແດງ).

**ກະດົ້ນ ນ.** ອະໄວຍະວະບ່ອນທາງຫຼັງຂອງ ຫົວຕໍ່ຈາກຄໍຂຶ້ນໄປ ງ່ອນດົ້ນກໍ່ວ່າ.

**ກະໂດນ ນ.** ໄມ້ແນວໜຶ່ງ ໃບ ແລະເປືອກ ມີລົດຝາດ ໃບອ່ອນໃຊ້ເປັນອາຫານໄດ້ ຕົ້ນກະໂດນມີ 3 ຊະນິດ ຄື: 1. ກະໂດນໂຄກ ເປັນຕົ້ນໄມ້ຂະໜາດໃຫຍ່ ເກີດຕາມໂຄກ 2. ກະໂດນນ້ຳ ເປັນຕົ້ນໄມ້ຂະໜາດນ້ອຍ ມັກເກີດຕາມຫາມ ຕາມແຄມຫ້ວຍ ແຄມຮ່ອງ 3. ກະໂດນເຕ້ຍ ເປັນໄມ້ພຸ່ມ ມັກເກີດຕາມທົ່ງ.

**ກະດິບ ກ.** ຄືບໄປເທື່ອລະນ້ອຍ ເຊັ່ນ ແມງບົ້ງ ຫຼື ໜອນຄືບໄປ ເອີ້ນ ກະດິບ, ກະດິບໆກໍ່ວ່າ.

**ກະດຶບ 1 ກ.** ອາການເຄື່ອນໄຫວຂອງສັດຈຳພວກບົ້ງ ເ ອີ້ນ ກະດຶບ ຫຼືຄືບ ກະດຶບໆກໍ່ວ່າ.

**ກະດຶບ 2 ວ.** ກະດິບ, ອາການຄືບໄປເທື່ອລະນ້ອຍ ເຊັ່ນ ແມງບົ້ງກືໄຕ່ໄປ.

**ກະດຸບໆ** ( ເບິ່ງກະດຶບໆ ).

**ກະເດບໆ ວ.** ອາການຄືບໄປ ຫຼືອາການທີ່ຄົນຂຶ້ນຕົ້ນໄມ້ ເອົາມືໂອບກອດລຳຕົ້ນ ແລ້ວໃຊ້ແຮງຕີນຍັນທັງສອງເບື້ອງ ເຮັດກະເດບໆຂຶ້ນໄປ.

**ກະແດບໆ ວ.** ອາການດັ່ງດຽວກັບກະເດບໆແຕ່ເປັນອາການຂອງຕົວນ້ອຍ.

**ກະແດບເດົ້າ ນ.** ຊື່ນົກນ້ອຍແນວໜຶ່ງ ຂົນສີຟ້າກ່ານຂາວອອກໝົ່ນ ມັກຊອກຫາກິນຕາມແຄມນ້ຳ ເວລາຢືນ ທຳອາການເດົ້າງັບໆ.

**ກະດຶມ ວ.** ອາການທີ່ເຮັດໃຫ້ຂົນລຸກຂົນພອງໜັງຄີງລຸກເຢືອກໆ ຍ້ອນຂີ້ດຽດ.

**ກະດຸມ ນ.** ໝາກຕຸ້ມໂສ້ງເສື້ອສຳລັບຕິດໃສ່ໂສ້ງເສື້ອ ຫຼືກະເປົາ, ດຸມ ຫຼື ໝາກກະດຸມກໍ່ວ່າ,

**ກະດຸມພີ ນ.** (ປ.) ຄົນມີເງິນ, ຄົນຮັ່ງມີສີສຸກ.

**ກະດຸມພິດ ນ.** (ປ.) ມີຄວາມໝາຍດຽວກັບກັບ

ກະດຸມພີ, ດັ່ງວ່າ "ເສດຖີພ້ອມ ພາມມະນາກະດຸມພີດ" (ສິນ).

**ກະດອນ ກ.** ສະທ້ອນຂຶ້ນ, ກະເດັນຂຶ້ນ ເອີ້ນ ກະດອນ ດອນກໍ່ວ່າ.

**ກະດອມ ນ.** ຊື່ພັນໄມ້ຊະນິດໜຶ່ງ ມີລົດຂົມ ມີສາມຊະນິດ ຄື: ກະດອມຕົ້ນ, ກະດອມເຄືອ, ກະດອມພຸ່ມ ຢ່າງວ່າ "ຍິນຂົມໃນພາກກະດອມແຄມຮົ້ວ" (ຮຸ່ງ).

**ກະດອມເຄືອ ນ.** ຊື່ພັນໄມ້ເຄືອຊະນິດໜຶ່ງ ໃຊ້ເຮັດຢາໄດ້ ເອີ້ນ ກະດອມເຄືອ.

**ກະດອມຕົ້ນ ນ.** ຊື່ພັນໄມ້ຊະນິດໜຶ່ງ ໃບເປັນແສກ ດອກເປັນຊໍ່ ມີສີຂາວ ເອີ້ນ ກະດອມຕົ້ນ.

**ກະດອມພຸ່ມ ນ.** ຊື່ພັນໄມ້ຊະນິດໜຶ່ງຕົ້ນເປັນພຸ່ມ ດອກເປັນຊໍ່ ມີສີຂາວກິ່ນຫອມ ເອີ້ນ ກະດອມພຸ່ມ.

**ກະດຽມ 1 ວ.** ອາການທີ່ເຮັດໃຫ້ອຶນລຸກ, ອາການທີ່ພາໃຫ້ອາຍໃນໃຈ ຫຼື ອາການເຮັດໃຫ້ຢາກຫົວ ເພາະຖືກໜຶ່ງສ້ວງ.

**ກະດຽມ 2 ກ.** ຮູ້ສຶກອຶນລຸກ, ຮູ້ສຶກອາຍໃນໃຈ ຮູ້ສຶກຢາກຫົວ ເພາະຖືກໜຶ່ງສ້ວງ.

**ກະແດ່ວ 1 ວ.** ອາການດີ້ນຢູ່ກັບບ່ອນ ຖ້າເປັນສັດນ້ອຍ ເອີ້ນດີ້ນກະແດ່ວ ແດ່ວໆ ກໍ່ວ່າ, ຖ້າເປັນສັດໃຫຍ່ ເອີ້ນ ດີ້ນກະດ່າວໆ.

**ກະແດ່ວ 2 ວ.** ບາດຢ່າງຂອງຄົນຂາຕໍ່າຂາສູງ ຫຼື ຄົນເຈັບຂາ ເຈັບຕີນ.

**ກະແດ່ວ 3 ວ.** ມີຄວາມໝາຍດັ່ງດຽວກັບ ກະເດ່ວ ແຕ່ເປັນອາການ ຂອງຜູ້ນ້ອຍ ຫຼື ເດັກນ້ອຍ.

**ກະດຽວວ່າ ກ.** ຢຽວວ່າ, ຄືວ່າ ເອົ້າໃຈວ່າ.

**ກະຕະເວທີ ນ.** (ປ.) ການຮູ້ຈັກບຸນຄຸນຂອງທ່ານຜູ້ມີຄຸນຕໍ່ຕົນ, ການຕອບແທນຄຸນ.

**ກະຕາທິການ ນ.** (ປ.) ບຸນກຸສົນ ຫຼືຄວາມດີອັນຍິ່ງໃຫຍ່ ທີ່ໄດ້ສ້າງໄວ້.

**ກະຕ່າ ນ.** ພາຊະນະທີ່ສານດ້ວຍຕອກ, ລວດ ຫຼື ຫວາຍຮູບກົມ ມີສາຍພາຍ ຫຼື ງວງ ໃຊ້ສໍາລັບໃສ່ສິ່ງຂອງ.

**ກະຕ່າກວຍ ນ.** ກະຕ່າໃຫຍ່ ທີ່ສານອັດໄຂວ່ ເປັນຕາຫ່າງໆ ກະຕ່າຫ່າງ ກໍ່ວ່າ.

**ກະຕິ ນ.** (ປ.) ກະດີ ຫຼືກຸດີ, ເຮືອນຢູ່ຂອງພະສົງ ສາມະເນນ.

**ກະຕິກາ ນ.** (ປ.) ຂໍ້ກໍານົດ, ຂໍ້ຕົກລົງ, ຂໍ້ທີ່ນັດໝາຍກັນໄວ້, ກົດລະບຽບ.

**ກະຕິກາສັນຍາ ນ.** (ປ.) ໜັງສືສັນຍາ, ຄວາມຕົກລົງ.

**ກະຕືລືລົ້ນ ວ.** ຢາກເຮັດຢາກທໍາ, ຫ້າວຫັນ ວ່ອງໄວ, ຂຶ້ນໃຈຢາກເຮັດ.

**ກະແຕະ ນ.** ເຄື່ອງສານດ້ວຍຕອກ ຫຼືດິ້ວໄມ້ໄຜ່ ສານລາຍອັດເປັນແຜ່ນ ໃຊ້ສໍາລັບຮອງຕາກຂອງ: ອາຫານແຫ້ງ ຫຼືຢາ, ຝາແຕະ ກໍ່ວ່າ.

**ກະແຕ ນ.** ສັດສີ່ຕີນຊະນິດໜຶ່ງ ຄ້າຍກະຮອກ ຕົວນ້ອຍກວ່າກະຮອກ ຫາກິນຕາມຕົ້ນໄມ້ ແລະ ມັກເຮັດຮັງຢູ່ໂກນ.

**ກະແຕແຊ ນ.** ຝາອັດກະຕ່າສໍາລັບໃສ່ປາ, ຝາແຕແຊ ກໍ່ວ່າ.

**ກະແຕລອດຂອນ ນ.** ຊື່ພັນໄມ້ພຸ່ມຊະນິດໜຶ່ງ ມີຫົວ ໃຊ້ຫົວເປັນຢາໄດ້.

**ກະແຕແຮ ນ.** ມີຄວາມໝາຍ ດັ່ງດຽວກັບ

24/VII ຊຸມຈໍາໜ່າຍ

ກະແຕແຊ.

**ກະຕໍ ນ.** ສ່ວນກົກຂອງຕົ້ນໄມ້ ທີ່ຕັດລຳຕົ້ນອອກແລ້ວ ຕໍກໍ່ວ່າ.

**ກະຕໍ້ ນ.** ເຄື່ອງຫຼິ້ນແນວໜຶ່ງ ເປັນໜ່ວຍມົນໆ ສານດ້ວຍຫວາຍ ຫຼືວັດຖຸອື່ນ ເອີ້ນ ກະຕໍ້ ສຳລັບເຕະ ຫຼືຕົບ.

**ກະເຕີ 1 ນ.** ຝາແຕະທີ່ສານອັດ ເປັນຕາຫ່າງໆ ພໍຂອງນ້ອຍລອດລົງໄດ້ ເອີ້ນວ່າ ຝາກະເຕີ ຫຼືຝາເຕີ.

**ກະເຕີ 2 ນ.** ຂີ້ເຫຍື້ອ ທີ່ໄຫຼມາເກາະກັນເປັນແຜ່ນ ຢູ່ບ່ອນນ້ຳເວີນຍາມນ້ຳຊຸຫ້ວຍຊຸຂອງ ເອີ້ນວ່າ ຂີ້ກະເຕີ.

**ກະເຕີລອດຊ່ອງ ນ.** ຝາກະເຕີມີຮູບຄືເຝືອນ ໃຊ້ສຳລັບໃສ່ເຂົ້າແປ້ງທີ່ກວນແລ້ວ ໃຫ້ລອດລົງເປັນກ້ອນນ້ອຍໆ.

**ກະຕົ້ວ ນ.** ຊື່ນົກຊະນິດໜຶ່ງ ໃຫຍ່ກວ່ານົກແກ້ວ ສີຂາວ ມີຂົນເປັນຫອນງາມ ເອີ້ນ ນົກກະຕົ້ວ, ນົກຖົ້ວ ຫຼືນົກຖົ້ວຫົວຫງອກ ກໍ່ວ່າ.

**ກະໄຕ 1 ນ.** ມີດສຳລັບຕັດຜົມ ໃຊ້ໜີບ ມີຂາສອງຂາ ເອີ້ນມີດຕັດ ມີດແຊມ ກໍ່ວ່າ.

**ກະໄຕ 2 ນ.** ຂາກະໄຕ ເອີ້ນ ຂາກັບໄຕ, ຄາງກະໄຕ ກໍ່ວ່າ ກະດູກຄາງກະໄຕ ກໍ່ວ່າ.

**ກະໄຕ້ ນ.** ກະບອງ.

**ກະເຕົາ ນ.** ປາສ້ອຍ ຫຼືປາແຕບທີ່ຕາກແຫ້ງໝົດທັງຂີ້ ເອີ້ນປາເຕົາ ຫຼືປາກະເຕົາ ມີ 2 ຊະນິດ ຄື: ປາກະເຕົາແຫ້ງ ແລະ ປາກະເຕົາຕຳໃສ່ບັ້ງ.

**ກະຕ່ຳ ນ.** ເຄື່ອງຫ້າງເອົາສັດປ່າ ເຮັດດ້ວຍໄມ້ທ່ອນຍາວ ໜັກສົມຄວນ ມີສາຍໃຍພານເວລາສັດແລ່ນມາພານສາຍໃຍນີ້ ແລ້ວໄມ້ແມ່ກະຕ່ຳຈະລັ່ນລົງເຕັງມັນຕາຍທັນທີ.

**ກະຕັກ ນ.** ໄມ້ແກ່ນທີ່ເຫຼົາກົມໆ ຍາວປະມານສອກຄືບ ຝັງເຫຼັກແຫຼມທີ່ປາຍ ໃຊ້ແທງງົວເວລາທຽມກວຽນ ໃຫ້ຍ່າງໄວ ເອີ້ນເຫຼັກກະຕັກ.

**ກະຕາກ ກ.** ສຽງໄກ່ຮ້ອງກະຕາກໃນເວລາມັນໄຂ່ແລ້ວ ຫຼືຕື່ນຕົກໃຈ.

**ກະຕິກ ນ.** ພາຊະນະສຳລັບໃສ່ນ້ຳຮ້ອນ ຫຼືໃສ່ນ້ຳກ້ອນ ມີຮູບ ແລະຂະໜາດຕ່າງໆກັນ ຕິກນ້ຳກໍ່ວ່າ.

**ກະຕືກ ນ.** ຕົວພະຍາດ ທີ່ປົນຢູ່ກັບອຸດຈາລະໃນທ້ອງຄົນ ຫຼືສັດ ມີ 2 ແນວ ຄື: ກະຕືກແປ ຕົວແປ ແລະຍາວ, ກະຕືກກົມ ຕົວກົມຄືຂີ້ກະເດືອນ ຂີ້ກະຕືກ ກໍ່ວ່າ.

**ກະໂຕກ ນ.** ພາຊະນະທີ່ສານດ້ວຍໄມ້ໄຜ່ ຫຼືສຽນເອົາໄມ້ເນື້ອແຂງ ໃຊ້ເປັນພາເຂົ້າ ເອີ້ນ ກະໂຕກ ຫຼືໂຕກ ກໍ່ວ່າ.

**ກະຕັງກະຕົ້ວ ນ.** ຊື່ຕົ້ນໄມ້ແນວໜຶ່ງ ເອີ້ນວ່າ ຕົ້ນຢາງ ແລະຢາງທີ່ໄດ້ຈາກຕົ້ນໄມ້ດັ່ງກ່າວນີ້ ໃຊ້ເປັນປະໂຫຍດໄດ້ຫຼາຍຢ່າງ.

**ກະຕ່ອງ ນ.** ສະຫວິງສຳລັບຕັກປາ ເວລາປາຕິດເບັດ ຫຼືໃຊ້ສ້ອນປາຕາມໜອງ ຫຼືບຶງ ຖັກ ຫຼືສານດ້ວຍປ່ານ ຫຼືປໍ ມີຄັນຈັບ ເອີ້ນກະຕ່ອງ.

**ກະຕ່ອງກະແຕ່ງ ວ.** ສິ່ງຂອງທີ່ຫ້ອຍ ຫຼືແຂວນໄວ້ເປັນພວງ ເອີ້ນ ກະຕ່ອງກະແຕ່ງ.

**ກະຕ່າຍ 1 ນ.** ຊື່ສັດສີ່ຕີນຊະນິດໜຶ່ງ ຕົວຂະໜາດແມວ ຫູຍາວ ຂຸດດິນເຮັດເປັນພ້ອງຢູ່ ມີ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ